ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ທະນາຄານແຫ່ງ ສປປ ລາວ

ເລກທີ 695 /ທຫລ
ນະຄອນຫຼວງວຽງຈັນ, ວັນທີ 06 ທັນວາ 2021

# ຂໍ້ຕົກລົງ
# ວ່າດ້ວຍສະຫະກອນສິນເຊື່ອ ແລະ ເງິນຝາກປະຢັດ

- ອີງຕາມ ກົດໝາຍວ່າດ້ວຍທະນາຄານແຫ່ງ ສປປ ລາວ (ສະບັບປັບປຸງ) ສະບັບເລກທີ 47/ສພຊ, ລົງວັນທີ 19 ມີຖຸນາ 2018;
- ອີງຕາມ ກົດໝາຍວ່າດ້ວຍວິສາຫະກິດ ສະບັບເລກທີ 46/ສພຊ, ລົງວັນທີ 26 ທັນວາ 2013;
- ອີງຕາມ ດຳລັດວ່າດ້ວຍກຸ່ມ ແລະ ສະຫະກອນ ສະບັບເລກທີ 606/ລບ, ລົງວັນທີ 26 ພະຈິກ 2020;
- ອີງຕາມ ການຄົ້ນຄວ້າ ແລະ ການສະເໜີ ຂອງກົມຄຸ້ມຄອງສະຖາບັນການເງິນ.

**ຜູ້ວ່າການທະນາຄານແຫ່ງ ສປປ ລາວ ຕົກລົງ:**

## ໝວດທີ 1
## ບົດບັນຍັດທົ່ວໄປ

### ມາດຕາ 1 ຈຸດປະສົງ

ຂໍ້ຕົກລົງສະບັບນີ້ ກຳນົດຫຼັກການ, ລະບຽບການ ແລະ ມາດຕະການ ກ່ຽວກັບການສ້າງຕັ້ງ, ການເຄື່ອນໄຫວ, ການຄຸ້ມຄອງ ແລະ ຕິດຕາມ ກວດກາ ສະຫະກອນສິນເຊື່ອ ແລະ ເງິນຝາກປະຢັດ ເພື່ອໃຫ້ເຄື່ອນໄຫວຢ່າງຖືກຕ້ອງ ແລະ ໝັ້ນຄົງ ແນໃສ່ສ້າງເງື່ອນໄຂໃຫ້ປະຊາຊົນບັນດາເຜົ່າ ສາມາດເຂົ້າເຖິງການບໍລິການທາງດ້ານການເງິນຢ່າງກວ້າງຂວາງ ປະກອບສ່ວນເຂົ້າໃນການແກ້ໄຂຄວາມທຸກຍາກ ແລະ ພັດທະນາເສດຖະກິດ-ສັງຄົມ ຂອງຊາດ.

### ມາດຕາ 2 ສະຫະກອນສິນເຊື່ອ ແລະ ເງິນຝາກປະຢັດ

ສະຫະກອນສິນເຊື່ອ ແລະ ເງິນຝາກປະຢັດ ຂຽນຫຍໍ້ວ່າ "ສສງ" ແມ່ນການຈັດຕັ້ງທຸລະກິດລວມໝູ່ຂອງຜູ້ທີ່ປະກອບອາຊີບດຽວກັນ ຫຼື ອາຊີບອື່ນ ທີ່ສ້າງຕັ້ງຂຶ້ນດ້ວຍຄວາມສະໝັກໃຈ ເພື່ອຮ່ວມມືຊ່ວຍເຫຼືອຊຶ່ງກັນ ແລະ ກັນ ທາງດ້ານທຶນຮອນ ແລະ ໄດ້ຮັບອະນຸຍາດດຳເນີນທຸລະກິດ ໂດຍສອດຄ່ອງກັບຂໍ້ຕົກລົງສະບັບນີ້.

**ມາດຕາ 3 ການອະທິບາຍຄຳສັບ**

ຄຳສັບທີ່ນຳໃຊ້ໃນຂໍ້ຕົກລົງສະບັບນີ້ ມີຄວາມໝາຍ ດັ່ງນີ້:

1. **ທຶນຈົດທະບຽນ** ໝາຍເຖິງ ມູນຄ່າຮຸ້ນທັງໝົດ ທີ່ປະກອບເປັນທຶນເບື້ອງຕົ້ນ ຂອງສະມາຊິກທັງໝົດ ໃນເວລາສ້າງຕັ້ງສະຫະກອນສິນເຊື່ອ ແລະ ເງິນຝາກປະຢັດ;

2. **ຜູ້ກ່ຽວຂ້ອງ** ໝາຍເຖິງ ຜູ້ບໍລິຫານ, ຜູ້ທີ່ມີສາຍພົວພັນ, ບຸກຄົນ ທີ່ມີຜົນປະໂຫຍດທາງດ້ານທຸລະກິດກັບຜູ້ບໍລິຫານ;

3. **ຜູ້ບໍລິຫານ** ໝາຍເຖິງ ສະມາຊິກສະພາບໍລິຫານ, ຄະນະກຳມະການກວດກາພາຍໃນ, ຄະນະກຳມະການສິນເຊື່ອ, ຄະນະອຳນວຍການ, ຄະນະພະແນກ ຫຼື ໜ່ວຍງານ ຂອງສະຫະກອນສິນເຊື່ອ ແລະ ເງິນຝາກປະຢັດ;

4. **ຜູ້ທີ່ມີສາຍພົວພັນ** ໝາຍເຖິງ ລູກ (ລູກຄີງ, ລູກລ້ຽງ, ລູກນ້າ), ຜົວ ຫຼື ເມຍ, ຍາດສາຍຕັ້ງ ຫຼື ຍາດສາຍຂວາງ ຂອງຜູ້ບໍລິຫານ.

**ມາດຕາ 4 ຫຼັກການເຄື່ອນໄຫວ ແລະ ການຄຸ້ມຄອງ ສະຫະກອນສິນເຊື່ອ ແລະ ເງິນຝາກປະຢັດ**

ການເຄື່ອນໄຫວ ແລະ ການຄຸ້ມຄອງ ສະຫະກອນສິນເຊື່ອ ແລະ ເງິນຝາກະຢັດ ໃຫ້ປະຕິບັດຕາມຫຼັກການ ດັ່ງນີ້:

1. ສອດຄ່ອງກັບແນວທາງ ນະໂຍບາຍ, ຍຸດທະສາດ, ກົດໝາຍ ແລະ ແຜນພັດທະນາເສດຖະກິດ-ສັງຄົມຂອງຊາດ;

2. ຄຸ້ມຄອງຢ່າງລວມສູນ ແລະ ເປັນເອກະພາບ ໃນຂອບເຂດທົ່ວປະເທດ;

3. ຮັກສາຄວາມຍືນຍົງ ຂອງສະຫະກອນສິນເຊື່ອ ແລະ ເງິນຝາກປະຢັດ;

4. ໃຫ້ບໍລິການຢ່າງມີຈັນຍາບັນ, ໂປ່ງໃສ, ຮັບປະກັນສິດ ແລະ ຜົນປະໂຫຍດອັນຊອບທຳ ຂອງສະມາຊິກ.

**ມາດຕາ 5 ຂອບເຂດການນຳໃຊ້**

ຂໍ້ຕົກລົງສະບັບນີ້ ນຳໃຊ້ສຳລັບ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທັງພາຍໃນ ແລະ ຕ່າງປະເທດ ທີ່ພົວພັນກັບການສ້າງຕັ້ງ ແລະ ການເຄື່ອນໄຫວຂອງສະຫະກອນສິນເຊື່ອ ແລະ ເງິນຝາກປະຢັດ ຢູ່ ສປປ ລາວ.

## ໝວດທີ 2
## ການຂໍອະນຸຍາດດຳເນີນທຸລະກິດ

**ມາດຕາ 6 ການຂໍອະນຸຍາດດຳເນີນທຸລະກິດ**

ບຸກຄົນ, ກຸ່ມທ້ອນເງິນ, ກອງທຶນພັດທະນາບ້ານ ຫຼື ທະນາຄານບ້ານ ຫຼື ການລວມຕົວກັນ ຂອງກຸ່ມທ້ອນເງິນ, ກອງທຶນພັດທະນາບ້ານ ຫຼື ທະນາຄານບ້ານ ທີ່ມີຈຸດປະສົງຂໍອະນຸຍາດດຳເນີນທຸລະກິດສະຫະກອນສິນເຊື່ອ ແລະ ເງິນຝາກປະຢັດ ຕ້ອງໄດ້ແຈ້ງຂຶ້ນທະບຽນວິສາຫະກິດນຳຂະແໜງການອຸດສາຫະກຳ ແລະ ການ

ຄ້າ. ພາຍຫຼັງໄດ້ຮັບໃບທະບຽນວິສາຫະກິດແລ້ວ ຕ້ອງຂໍອະນຸຍາດດຳເນີນທຸລະກິດ ນຳກົມຄຸ້ມຄອງສະຖາບັນການເງິນ ຫຼື ສາຂາທະນາຄານແຫ່ງ ສປປ ລາວ ຢູ່ທ້ອງຖິ່ນ ພ້ອມທັງລາຍງານໃຫ້ຂະແໜງກະສິກຳ ແລະ ປ່າໄມ້ ເພື່ອຊາບ.

**ມາດຕາ 7 ເງື່ອນໄຂການຂໍອະນຸຍາດດຳເນີນທຸລະກິດ**

ເງື່ອນໄຂຂອງການຂໍອະນຸຍາດດຳເນີນທຸລະກິດ ມີ ດັ່ງນີ້:

1. ມີສະມາຊິກ ຢ່າງໜ້ອຍ 150 ຄົນ;
2. ມີຖານະການເງິນດີ;
3. ມີໂຄງປະກອບການຈັດຕັ້ງ ຕາມລະບຽບການທີ່ກ່ຽວຂ້ອງ;
4. ມີສະຖານທີ່ຕັ້ງທີ່ເໝາະສົມ ເພື່ອຮອງຮັບໃນການດຳເນີນທຸລະກິດ;
5. ມີໂປຣແກຣມບັນຊີ ທີ່ສາມາດຮັບຮອງການລາຍງານການເຄື່ອນໄຫວ ຕາມຜັງບັນຊີ ທີ່ທະນາຄານແຫ່ງ ສປປ ລາວ ກຳນົດ;
6. ເງື່ອນໄຂອື່ນ ຕາມການກຳນົດຂອງທະນາຄານແຫ່ງ ສປປ ລາວ ໃນແຕ່ລະໄລຍະ.

**ມາດຕາ 8 ເອກະສານປະກອບຂໍອະນຸຍາດດຳເນີນທຸລະກິດ**

ເອກະສານປະກອບຂໍອະນຸຍາດດຳເນີນທຸລະກິດ ມີເອກະສານຕົ້ນຕໍ ດັ່ງນີ້:

1. ຄຳຮ້ອງຂໍອະນຸຍາດດຳເນີນທຸລະກິດ ຕາມແບບພິມ ຂອງທະນາຄານແຫ່ງ ສປປ ລາວ;
2. ບົດວິພາກເສດຖະກິດ;
3. ເອກະສານລາຍງານການເງິນ ໄລຍະ ສາມ ປີຍ້ອນຫຼັງ;
4. ບົດບັນທຶກກອງປະຊຸມການສ້າງຕັ້ງສະຫະກອນສິນເຊື່ອ ແລະ ເງິນຝາກປະຢັດ ທີ່ໄດ້ກຳນົດໂຄງປະກອບການຈັດຕັ້ງ ເປັນຕົ້ນ ສະພາບໍລິຫານ, ຄະນະກຳມະການກວດກາພາຍໃນ, ຄະນະກຳມະການສິນເຊື່ອ ແລະ ຄະນະອຳນວຍການ;
5. ຊີວະປະຫວັດ, ໃບແຈ້ງໂທດ, ໃບຢັ້ງຢືນທີ່ຢູ່, ສຳເນົາບັດປະຈຳຕົວ, ສຳເນົາສຳມະໂນຄົວ ແລະ ໃບຢັ້ງຢືນຄຸນວຸດທິ ຂອງສະມາຊິກສະພາບໍລິຫານ;
6. ສຳເນົາໃບຢັ້ງຢືນຫຼັກສູດຜູ້ບໍລິຫານ ທີ່ອອກໂດຍສະມາຄົມສະຫະກອນສິນເຊື່ອ ແລະ ເງິນຝາກປະຢັດ ສປປ ລາວ ຢ່າງໜ້ອຍໜຶ່ງສ່ວນສາມ ຂອງຜູ້ບໍລິຫານ ຍົກເວັ້ນ ຄະນະພະແນກ ຫຼື ໜ່ວຍງານ ຂອງສະຫະກອນສິນເຊື່ອ ແລະ ເງິນຝາກປະຢັດ;
7. ກົດລະບຽບພາຍໃນ;
8. ບັນຊີລາຍຊື່ ແລະ ລາຍເຊັນຂອງສະມາຊິກທັງໝົດ ພ້ອມທັງຈຳນວນຮຸ້ນ ແລະ ມູນຄ່າຮຸ້ນ;
9. ໃບຢັ້ງຢືນທີ່ຕັ້ງ ແລະ ແຜນວາດທີ່ຕັ້ງສຳນັກງານ ໂດຍມີການຢັ້ງຢືນຈາກອົງການປົກຄອງບ້ານບ່ອນສຳນັກງານຕັ້ງຢູ່;
10. ໃບມອບສິດນຳໃຊ້ສຳນັກງານ ຫຼື ສັນຍາເຊົ່າສຳນັກງານ (ກໍລະນີນຳໃຊ້ ຫຼື ເຊົ່າ ສຳນັກງານ ຂອງບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງອື່ນ);
11. ໃບມອບສິດ ກໍລະນີແຕ່ງຕັ້ງຜູ້ຕາງໜ້າມາພົວພັນເອກະສານແທນຕົນ.

### ມາດຕາ 9 ການພິຈາລະນາອອກໃບອະນຸຍາດດຳເນີນທຸລະກິດ

ພາຍຫຼັງໄດ້ຮັບເອກະສານຂໍອະນຸຍາດດຳເນີນທຸລະກິດສະຫະກອນສິນເຊື່ອ ແລະ ເງິນຝາກປະຢັດ ຢ່າງຄົບຖ້ວນ ແລະ ຖືກຕ້ອງ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 8 ຂອງຂໍ້ຕົກລົງສະບັບນີ້ ກົມຄຸ້ມຄອງສະຖາບັນການເງິນ ຫຼື ສາຂາທະນາຄານແຫ່ງ ສປປ ລາວ ຢູ່ທ້ອງຖິ່ນ ຈະພິຈາລະນາ ແລະ ແຈ້ງຕອບເຫັນດີທາງດ້ານຫຼັກການ ຫຼື ປະຕິເສດການຂໍອະນຸຍາດດຳເນີນທຸລະກິດ ພາຍໃນກຳນົດເວລາ ສາມສິບ ວັນ.

ກົມຄຸ້ມຄອງສະຖາບັນການເງິນ ຫຼື ສາຂາທະນາຄານແຫ່ງ ສປປ ລາວ ຢູ່ທ້ອງຖິ່ນ ຕ້ອງແຈ້ງຕອບເຫັນດີທາງດ້ານຫຼັກການ ຫາກເຫັນວ່າ:

1. ມີທຶນພຽງພໍ, ຈະແຈ້ງ ແລະ ຖືກຕ້ອງ ຕາມຂໍ້ຕົກລົງສະບັບນີ້;
2. ບົດວິພາກເສດຖະກິດ ມີເນື້ອໃນຄົບຖ້ວນ, ສົມເຫດສົມຜົນ ແລະ ສາມາດຈັດຕັ້ງປະຕິບັດໄດ້;
3. ສະມາຊິກສະພາບໍລິຫານ ແລະ ຄະນະອຳນວຍການ ມີຄຸນວຸດທິ, ປະສົບການທາງດ້ານການເງິນ, ການທະນາຄານ ຫຼື ຂະແໜງການອື່ນທີ່ກ່ຽວຂ້ອງ;
4. ຜູ້ບໍລິຫານ ຍົກເວັ້ນ ຄະນະພະແນກ ຫຼື ໜ່ວຍງານ ຂອງສະຫະກອນສິນເຊື່ອ ແລະ ເງິນຝາກປະຢັດ ໄດ້ຜ່ານຫຼັກສູດຜູ້ບໍລິຫານ ຂອງສະມາຄົມສະຫະກອນສິນເຊື່ອ ແລະ ເງິນຝາກປະຢັດ ສປປ ລາວ;

ກົມຄຸ້ມຄອງສະຖາບັນການເງິນ ຫຼື ສາຂາທະນາຄານແຫ່ງ ສປປ ລາວ ຢູ່ທ້ອງຖິ່ນ ຈະອອກໃບອະນຸຍາດດຳເນີນທຸລະກິດສະຫະກອນສິນເຊື່ອ ແລະ ເງິນຝາກປະຢັດ ພາຍໃນກຳນົດເວລາ ສິບຫ້າ ວັນລັດຖະການ ກໍ່ຕໍ່ເມື່ອໄດ້ສຳເລັດການປະຕິບັດເງື່ອນໄຂ ດັ່ງນີ້:

1. ຖອກທຶນຈົດທະບຽນ ຢ່າງຄົບຖ້ວນ;
2. ປະກອບພະນັກງານໃຫ້ຄົບຖ້ວນ;
3. ມີຄວາມພ້ອມໃນການດຳເນີນທຸລະກິດ ເຊັ່ນ ມີໂປຣແກຣມບັນຊີ, ສະຖານທີ່ຕັ້ງທີ່ເໝາະສົມ, ປະກອບວັດຖຸເຕັກນິກ, ລະບົບຮັກສາຄວາມປອດໄພສຳນັກງານ, ລະບົບດຳເນີນງານ ແລະ ລະບົບຄວບຄຸມພາຍໃນຄົບຊຸດ ເພື່ອຮັບປະກັນໃຫ້ແກ່ການເລີ່ມດຳເນີນທຸລະກິດ.

### ມາດຕາ 10 ທຶນຈົດທະບຽນ

ການດຳເນີນທຸລະກິດສະຫະກອນສິນເຊື່ອ ແລະ ເງິນຝາກປະຢັດ ຕ້ອງມີທຶນຈົດທະບຽນຈຳນວນຕໍ່າສຸດ ຫ້າຮ້ອຍລ້ານ ກີບ.

ທຶນຈົດທະບຽນ ແມ່ນປະກອບເປັນເງິນ ແລະ ນຳໃຊ້ເຂົ້າໃນເປົ້າໝາຍ ດັ່ງນີ້:

1. ສ້ອມແປງສຳນັກງານ ແລະ ປະກອບວັດຖຸເຕັກນິກ ບໍ່ເກີນ ສິບສ່ວນຮ້ອຍ ຂອງທຶນຈົບທະບຽນທັງໝົດ;
2. ເປັນແຫຼ່ງທຶນເຂົ້າໃນການປ່ອຍເງິນກູ້.

ສະຫະກອນສິນເຊື່ອ ແລະ ເງິນຝາກປະຢັດ ສາມາດເພີ່ມ ຫຼື ຫຼຸດທຶນຈົດທະບຽນ ຂອງຕົນໄດ້ ຕາມການຕົກລົງເຫັນດີຂອງກອງປະຊຸມໃຫຍ່ສະມາຊິກ ໂດຍໄດ້ຮັບອະນຸຍາດຈາກກົມຄຸ້ມຄອງສະຖາບັນການເງິນ ຫຼື ສາຂາທະນາຄານແຫ່ງ ສປປ ລາວ ຢູ່ທ້ອງຖິ່ນ.

### ມາດຕາ 11 ຮຸ້ນ ແລະ ການຖືຮຸ້ນ

ຮຸ້ນຂອງສະຫະກອນສິນເຊື່ອ ແລະ ເງິນຝາກປະຢັດ ແມ່ນການປະກອບຮຸ້ນ ຂອງສະມາຊິກທີ່ນຳໃຊ້ເປັນທຶນຈົດທະບຽນໃນເວລາສ້າງຕັ້ງ ແລະ ໃນເວລາດຳເນີນທຸລະກິດ, ແຕ່ລະຮຸ້ນມີມູນຄ່າເທົ່າກັນ ແລະ ມີມູນຄ່າບໍ່ເກີນ ໜຶ່ງແສນ ກີບ ຕໍ່ໜຶ່ງຮຸ້ນ ຕາມທີ່ໄດ້ກຳນົດໄວ້ໃນກົດລະບຽບພາຍໃນ.

ການຖືຮຸ້ນຂອງສະມາຊິກ ປະຕິບັດ ດັ່ງນີ້:

1. ສະມາຊິກຜູ້ໜຶ່ງ ຖືຮຸ້ນຢ່າງໜ້ອຍ ໜຶ່ງ ຮຸ້ນ ແຕ່ສູງສຸດບໍ່ໃຫ້ເກີນ ສິບສ່ວນຮ້ອຍ ຂອງຮຸ້ນທັງໝົດ;
2. ສະມາຊິກ ແລະ ຜູ້ທີ່ມີສາຍພົວພັນ ສາມາດຖືຮຸ້ນ ລວມກັນສູງສຸດບໍ່ເກີນ ຊາວສ່ວນຮ້ອຍ ຂອງຮຸ້ນທັງໝົດ;
3. ຈຳນວນຮຸ້ນ ຈະປ່ຽນແປງໄປຕາມການເພີ່ມຂຶ້ນ ຫຼື ຫຼຸດລົງ ຂອງສະມາຊິກ.

### ມາດຕາ 12 ໃບຮຸ້ນ

ໃບຮຸ້ນ ແມ່ນເອກະສານສຳຄັນທາງດ້ານກົດໝາຍ ເພື່ອສະແດງເຖິງສິດ ແລະ ຄວາມເປັນເຈົ້າຂອງສ່ວນໜຶ່ງຂອງສະມາຊິກ ໃນສະຫະກອນສິນເຊື່ອ ແລະ ເງິນຝາກປະຢັດ ໂດຍປະກອບມີເນື້ອໃນຕົ້ນຕໍ ຄື ເລກທີໃບຮຸ້ນ, ຊື່ຜູ້ຖືຮຸ້ນ, ວັນ, ເດືອນ, ປີ ອອກໃບຮຸ້ນ, ຈຳນວນ ແລະ ມູນຄ່າຮຸ້ນ.

ສະຫະກອນສິນເຊື່ອ ແລະ ເງິນຝາກປະຢັດ ຕ້ອງອອກໃບຮຸ້ນ ໃຫ້ແກ່ສະມາຊິກຂອງຕົນ ພາຍຫຼັງທີ່ສະມາຊິກໄດ້ຊຳລະມູນຄ່າຮຸ້ນຄົບຖ້ວນ.

### ມາດຕາ 13 ກົດລະບຽບພາຍໃນ

ກົດລະບຽບພາຍໃນ ຂອງສະຫະກອນສິນເຊື່ອ ແລະ ເງິນຝາກປະຢັດ ຕ້ອງຜ່ານການຮັບຮອງຈາກກອງປະຊຸມໃຫຍ່ສະມາຊິກ ແລະ ກົມຄຸ້ມຄອງສະຖາບັນການເງິນ ຫຼື ສາຂາທະນາຄານແຫ່ງ ສປປ ລາວ ຢູ່ທ້ອງຖິ່ນ ຊຶ່ງມີເນື້ອໃນຕົ້ນຕໍ ດັ່ງນີ້:

1. ຊື່ເຕັມ ແລະ ຕົວຫຍໍ້ ຂອງສະຫະກອນສິນເຊື່ອ ແລະ ເງິນຝາກປະຢັດ;
2. ຈຸດປະສົງ, ເປົ້າໝາຍ ຂອງສະຫະກອນສິນເຊື່ອ ແລະ ເງິນຝາກປະຢັດ;
3. ທີ່ຕັ້ງສຳນັກງານ;
4. ໂຄງປະກອບການຈັດຕັ້ງ;
5. ວິທີການດຳເນີນກອງປະຊຸມໃຫຍ່ສະມາຊິກ ແລະ ການລົງມະຕິ;
6. ການແຕ່ງຕັ້ງ ຫຼື ປົດຕຳແໜ່ງ ຜູ້ບໍລິຫານ;
7. ສິດ ແລະ ຄວາມຮັບຜິດຊອບ ຂອງຜູ້ບໍລິຫານ;
8. ທຶນຊຶ່ງແບ່ງເປັນຮຸ້ນ, ມູນຄ່າຂອງຮຸ້ນ, ການຊຳລະຮຸ້ນ ແລະ ການຈ່າຍຄືນຮຸ້ນ;
9. ການເພີ່ມ ແລະ ການຫຼຸດຮຸ້ນ ຂອງສະມາຊິກ;
10. ການດຳເນີນງານ, ການເງິນ ແລະ ການບັນຊີ;
11. ການສະໝັກ, ເງື່ອນໄຂ, ການພິຈາລະນາ, ສິດ, ໜ້າທີ່ ແລະ ການສິ້ນສຸດ ການເປັນສະມາຊິກ;

12. ນະໂຍບາຍກ່ຽວກັບການລົງທຶນ, ສິນເຊື່ອ, ພະນັກງານ, ການເກັບກູ້ໜີ້ສິນ, ການສ້າງຄັງແຮ ສຳລັບໜີ້ທວງຍາກ;

13. ກຳນົດເວລາການໃຫ້ບໍລິການ;

14. ການປະຕິບັດລະບຽບຄວາມໝັ້ນຄົງ;

15. ວິທີແກ້ໄຂຂໍ້ຂັດແຍ່ງ;

16. ວິທີການເກັບຮັກສາຂໍ້ມູນທຸລະກຳ;

17. ການປົກປ້ອງຜູ້ຊົມໃຊ້ການບໍລິການທາງດ້ານການເງິນ ແລະ ການຕ້ານ ສະກັດກັ້ນ ການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ;

18. ນະໂຍບາຍຕໍ່ຜູ້ມີຜົນງານ ແລະ ມາດຕະການຕໍ່ຜູ້ລະເມີດ;

19. ການຍຸບເລີກ ແລະ ການຊຳລະສະສາງ.

**ມາດຕາ 14 ໃບອະນຸຍາດດຳເນີນທຸລະກິດ**

ໃບອະນຸຍາດດຳເນີນທຸລະກິດສະຫະກອນສິນເຊື່ອ ແລະ ເງິນຝາກປະຢັດ ສາມາດນຳໃຊ້ໄດ້ຕະຫຼອດໄລຍະເວລາຂອງການເຄື່ອນໄຫວທຸລະກິດ ແລະ ບໍ່ສາມາດໂອນ ຫຼື ມອບໃຫ້ບຸກຄົນອື່ນນຳໃຊ້.

ຊື່ຂອງສະຫະກອນສິນເຊື່ອ ແລະ ເງິນຝາກປະຢັດ ຕ້ອງນຳໜ້າດ້ວຍຄຳວ່າ ສະຫະກອນສິນເຊື່ອ ແລະ ເງິນຝາກປະຢັດ ຕາມທີ່ໄດ້ລະບຸໄວ້ໃນໃບອະນຸຍາດດຳເນີນທຸລະກິດ.

**ມາດຕາ 15 ຄ່າທຳນຽມ, ຄ່າບໍລິການ ແລະ ຄ່າຄຸ້ມຄອງປະຈຳປີ**

ສະຫະກອນສິນເຊື່ອ ແລະ ເງິນຝາກປະຢັດ ຕ້ອງເສຍຄ່າທຳນຽມ, ຄ່າບໍລິການ ແລະ ຄ່າຄຸ້ມຄອງປະຈຳປີ ຕາມລະບຽບການຂອງທະນາຄານແຫ່ງ ສປປ ລາວ.

**ມາດຕາ 16 ການເກັບຮັກສາ ແລະ ການເຜີຍແຜ່ ຂໍ້ມູນກ່ຽວກັບການອະນຸຍາດດຳເນີນທຸລະກິດ**

ກົມຄຸ້ມຄອງສະຖາບັນການເງິນ ຫຼື ສາຂາທະນາຄານແຫ່ງ ສປປ ລາວ ຢູ່ທ້ອງຖິ່ນ ຕ້ອງເກັບຮັກສາຂໍ້ມູນທັງໝົດ ກ່ຽວກັບການອະນຸຍາດດຳເນີນທຸລະກິດສະຫະກອນສິນເຊື່ອ ແລະ ເງິນຝາກປະຢັດ ພ້ອມທັງເຜີຍແຜ່ຂໍ້ມູນພື້ນຕໍ່ໃຫ້ມວນຊົນຮັບຊາບ ໂດຍຜ່ານສື່ທີ່ເໝາະສົມ ດັ່ງນີ້:

1. ຊື່ ແລະ ທີ່ຕັ້ງສຳນັກງານ;
2. ທຶນຈົດທະບຽນ;
3. ເລກທີ, ວັນທີ ຂອງໃບອະນຸຍາດດຳເນີນທຸລະກິດ;
4. ຂອບເຂດການດຳເນີນທຸລະກິດທີ່ໄດ້ຮັບອະນຸຍາດ.

## ໝວດທີ 3
## ໂຄງປະກອບການຈັດຕັ້ງ

**ມາດຕາ 17 ໂຄງປະກອບການຈັດຕັ້ງ**

ໂຄງປະກອບການຈັດຕັ້ງ ຂອງສະຫະກອນສິນເຊື່ອ ແລະ ເງິນຝາກປະຢັດ ປະກອບດ້ວຍ:

1. ກອງປະຊຸມໃຫຍ່ສະມາຊິກ;
2. ສະພາບໍລິຫານ;
3. ຄະນະກໍາມະການກວດກາພາຍໃນ;
4. ຄະນະກໍາມະການສິນເຊື່ອ;
5. ຄະນະອໍານວຍການ;
6. ພະແນກ ຫຼື ໜ່ວຍງານ.

**ມາດຕາ 18 ກອງປະຊຸມໃຫຍ່ສະມາຊິກ**

ກອງປະຊຸມໃຫຍ່ສະມາຊິກ ແມ່ນການຈັດຕັ້ງສູງສຸດຂອງສະຫະກອນສິນເຊື່ອ ແລະ ເງິນຝາກປະຢັດ ຊຶ່ງປະກອບດ້ວຍ ກອງປະຊຸມສາມັນ ແລະ ກອງປະຊຸມວິສາມັນ.

ກອງປະຊຸມສາມັນ ໄຂຂຶ້ນຢ່າງໜ້ອຍ ປີລະຄັ້ງ ຊຶ່ງຕ້ອງໄຂຂຶ້ນພາຍຫຼັງສໍາເລັດການກວດສອບຈາກບໍລິສັດກວດສອບພາຍນອກ ແລະ ພາຍຫຼັງສິ້ນສຸດປີການບັນຊີ ຊ້າສຸດບໍ່ໃຫ້ເກີນ ເດືອນທີສີ່ ຂອງປີຖັດໄປ.

ກອງປະຊຸມວິສາມັນ ໄຂຂຶ້ນເວລາໃດກໍໄດ້ ເພື່ອພິຈາລະນາບັນຫາສໍາຄັນ, ຈໍາເປັນ ແລະ ຮີບດ່ວນ ຕາມການຮຽກເຊີນ ຂອງສະມາຊິກສະພາບໍລິຫານ, ຄະນະກໍາມະການກວດກາພາຍໃນ ຫຼື ສະມາຊິກທີ່ມີຈໍານວນແຕ່ ໜຶ່ງສ່ວນສີ່ ຂຶ້ນໄປ ຂອງສະມາຊິກທັງໝົດ.

ກອງປະຊຸມໃຫ່ຍສະມາຊິກ ຈະໄຂຂຶ້ນໄດ້ກໍຕໍ່ເມື່ອ ມີສະມາຊິກເຂົ້າຮ່ວມຢ່າງໜ້ອຍ ສອງສ່ວນສາມ ຂອງຈໍານວນສະມາຊິກທັງໝົດ.

**ມາດຕາ 19 ສິດ ແລະ ໜ້າທີ່ຂອງກອງປະຊຸມໃຫຍ່ສະມາຊິກ**

ກອງປະຊຸມໃຫຍ່ສະມາຊິກ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ຮັບຟັງການລາຍງານຂອງສະພາບໍລິຫານ ກ່ຽວກັບການສະຫຼຸບຜົນການດໍາເນີນງານປະຈໍາປີ ແລະ ການສະເໜີແບ່ງເງິນປັນຜົນ;
2. ຮັບຟັງການລາຍງານຜົນການກວດກາ ຂອງຄະນະກໍາມະການກວດກາພາຍໃນ, ຄະນະກວດກາຂອງທະນາຄານແຫ່ງ ສປປ ລາວ ແລະ ຜົນການກວດສອບ ຂອງບໍລິສັດກວດສອບພາຍນອກ;
3. ຕົກລົງກ່ຽວກັບນະໂຍບາຍ ຕໍ່ສະມາຊິກສະພາບໍລິຫານ, ຄະນະກໍາມະການກວດກາພາຍໃນ, ຄະນະກໍາມະການສິນເຊື່ອ ແລະ ນະໂຍບາຍອື່ນ;
4. ຮັບຮອງເອົາແຜນທຸລະກິດ ແລະ ແຜນການການເງິນປະຈໍາປີ ລວມທັງການລົງທຶນໃນວິສາຫະກິດອື່ນ;
5. ຮັບຮອງເອົາກົດລະບຽບພາຍໃນ;

6. ຮັບຮອງເອົາການເພີ່ມ, ຫຼຸດຈຳນວນຮຸ້ນ ຫຼື ມູນຄ່າຮຸ້ນ ແລະ ການແບ່ງເງິນປັນຜົນ;

7. ຮັບຮອງເອົາການຄວບ ຫຼື ການຍົກເລີກສະຫະກອນສິນເຊື່ອ ແລະ ເງິນຝາກປະຢັດ;

8. ຄັດເລືອກ ຫຼື ປົດຕຳແໜ່ງ ສະມາຊິກສະພາບໍລິຫານ, ຄະນະກຳມະການກວດກາພາຍໃນ ແລະ ຄະນະກຳມະການສິນເຊື່ອ;

9. ຮັບຮອງເອົາການວ່າຈ້າງບໍລິສັດກວດສອບພາຍນອກ ຕາມການສະເໜີຂອງຄະນະກຳມະການກວດກາພາຍໃນ;

10. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມລະບຽບການທີ່ກ່ຽວຂ້ອງ.

## ມາດຕາ 20 ມະຕິກອງປະຊຸມ

ມະຕິກອງປະຊຸມໃຫຍ່ສະມາຊິກ ຈະມີຜົນສັກສິດໄດ້ກໍຕໍ່ເມື່ອ ໄດ້ຮັບຄະແນນສຽງຫຼາຍກວ່າ ເຄິ່ງໜຶ່ງຂອງສະມາຊິກທີ່ເຂົ້າຮ່ວມກອງປະຊຸມ.

ສະມາຊິກ ມີສິດລົງຄະແນນສຽງໃນກອງປະຊຸມ ພຽງໜຶ່ງສຽງເທົ່ານັ້ນ ໂດຍບໍ່ຂຶ້ນກັບຈຳນວນຮຸ້ນ, ມູນຄ່າຮຸ້ນ, ເງິນຝາກ ຫຼື ມູນຄ່າທຸລະກິດທີ່ສະມາຊິກດັ່ງກ່າວ ດຳເນີນກັບສະຫະກອນສິນເຊື່ອ ແລະ ເງິນຝາກປະຢັດ.

ສະມາຊິກຜູ້ໃດໜຶ່ງທີ່ມີສ່ວນກ່ຽວພັນ ຫຼື ມີສະມາຊິກຄອບຄົວໃກ້ຊິດ ກ່ຽວຂ້ອງກັບທຸລະກຳທີ່ກຳລັງຖືກພິຈາລະນາ ຈະບໍ່ມີສິດໃນການລົງຄະແນນສຽງຕໍ່ທຸລະກຳດັ່ງກ່າວ.

## ມາດຕາ 21 ສະພາບໍລິຫານ

ສະພາບໍລິຫານ ປະກອບດ້ວຍສະມາຊິກແຕ່ ຫ້າ ຫາ ເກົ້າຄົນ ໂດຍປະກອບມີ ປະທານ, ຮອງປະທານ ຊຶ່ງຖືກເລືອກຕັ້ງ ແລະ ປົດຕຳແໜ່ງໂດຍກອງປະຊຸມໃຫຍ່ສະມາຊິກ. ສະພາບໍລິຫານ ຕ້ອງເປັນຈຳນວນຄີກ, ໃນນີ້ ສາມາດປະກອບບຸກຄະລາກອນຈາກອົງການຈັດຕັ້ງຂອງລັດ ເຂົ້າເປັນສະມາຊິກບໍ່ເກີນ ໜຶ່ງສ່ວນສາມ ຂອງຈຳນວນສະມາຊິກທັງໝົດ.

ສະພາບໍລິຫານ ມີອາຍຸການ ຫ້າ ປີ ແລະ ສາມາດຖືກເລືອກຕັ້ງຄືນໃໝ່ໄດ້ ບໍ່ເກີນ ສອງ ສະໄໝຕິດຕໍ່ກັນ.

ໃນກໍລະນີທີ່ສະພາບໍລິຫານຜູ້ໃດໜຶ່ງລາອອກຈາກໜ້າທີ່, ເສຍຊີວິດ ຫຼື ບໍ່ສາມາດປະຕິບັດໜ້າທີ່ໄດ້ໃນລະຫວ່າງດຳລົງຕຳແໜ່ງ ປະທານສະພາບໍລິຫານມີສິດແຕ່ງຕັ້ງຜູ້ໃດຜູ້ໜຶ່ງປ່ຽນແທນຕາມການເຫັນດີຂອງສະມາຊິກສະພາບໍລິຫານ ຈົນກ່ວາຈະມີການໄຂກອງປະຊຸມສາມັນຄັ້ງຕໍ່ໄປ.

ປະທານ ຫຼື ຮອງປະທານ ສະພາບໍລິຫານ ຕ້ອງໄດ້ຜ່ານຫລັກສູດຜູ້ບໍລິຫານຂອງສະມາຄົມສະຫະກອນສິນເຊື່ອ ແລະ ເງິນຝາກປະຢັດ ສປປ ລາວ.

## ມາດຕາ 22 ເງື່ອນໄຂຂອງສະມາຊິກສະພາບໍລິຫານ

ສະມາຊິກສະພາບໍລິຫານ ຕ້ອງມີເງື່ອນໄຂພື້ນຕໍ່ ດັ່ງນີ້:

1. ເປັນສະມາຊິກ ຂອງສະຫະກອນສິນເຊື່ອ ແລະ ເງິນຝາກປະຢັດ ຢ່າງໜ້ອຍ ສາມ ປີ;

2. ມີຄວາມຮູ້, ຄວາມສາມາດ ແລະ ປະສົບການ ດ້ານການບໍລິຫານ, ການເງິນ, ການທະນາຄານ ຫຼື ກົດໝາຍ;

3. ມີພາວະເປັນຜູ້ນໍາ, ເປັນຕົວຢ່າງທີ່ດີໃຫ້ແກ່ບຸກຄົນອື່ນ, ມີນໍ້າໃຈເສຍສະຫຼະ, ມີຄວາມຮັບຜິດຊອບ, ມີຄວາມພ້ອມ ແລະ ເຕັມໃຈປະຕິບັດໜ້າທີ່;

4. ຮັບຟັງຄໍາເຫັນ ແລະ ຍອມຮັບເຫດຜົນຂອງສະມາຊິກ ແລະ ຂອງຜູ້ອື່ນ;

5. ມີຜົນການດໍາເນີນງານທີ່ດີ ໃນສະຫະກອນສິນເຊື່ອ ແລະ ເງິນຝາກປະຢັດ ໃນໄລຍະທີ່ດໍາລົງຕໍາແໜ່ງໃນສະໄໝຜ່ານມາ ແລະ ບໍ່ເຄີຍຖືກກອງປະຊຸມໃຫຍ່ສະມາຊິກ ມີມະຕິໃຫ້ປົດອອກຈາກຕໍາແໜ່ງ ໃນກໍລະນີທີ່ເປັນສະພາບໍລິຫານຊຸດເກົ່າ;

6. ບໍ່ເຄີຍຖືກສານຕັດສິນລົງໂທດທາງອາຍາ ໃນສະຖານລັກຊັບ, ສໍ້ໂກງຊັບ, ຍັກຍອກຊັບ, ປອມແປງເອກະສານ, ຮັບ ຫຼື ໃຫ້ສິນບົນ, ສໍ້ລາດບັງຫຼວງ ຫຼື ຟອກເງິນ;

7. ບໍ່ເຄີຍຖືກປົດອອກຈາກການເປັນຜູ້ບໍລິຫານ ຫຼື ພະນັກງານ ໃນອົງກອນອື່ນ.

**ມາດຕາ 23 ສິດ ແລະ ໜ້າທີ່ ຂອງສະພາບໍລິຫານ**

ສະພາບໍລິຫານ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ຈັດຕັ້ງປະຕິບັດມະຕິກອງປະຊຸມໃຫຍ່ສະມາຊິກ;

2. ລາຍງານຜົນ ແລະ ແຜນການເຄື່ອນໄຫວທຸລະກິດ ຕໍ່ກອງປະຊຸມສາມັນ;

3. ສະເໜີຕໍ່ກອງປະຊຸມສາມັນ ເພື່ອພິຈາລະນາຮັບຮອງເອົາການແບ່ງເງິນປັນຜົນ ແລະ ການສ້າງຄັງຕ່າງໆ;

4. ແຕ່ງຕັ້ງສະມາຊິກສະພາບໍລິຫານປ່ຽນແທນ ໃນກໍລະນີທີ່ສະມາຊິກສະພາບໍລິຫານຜູ້ໃດໜຶ່ງລາອອກຈາກໜ້າທີ່, ເສຍຊີວິດ ຫຼື ບໍ່ສາມາດປະຕິບັດໜ້າທີ່ໄດ້;

5. ສະເໜີເປີດກອງປະຊຸມວິສາມັນ ເພື່ອພິຈາລະນາບັນຫາສໍາຄັນ, ຈໍາເປັນ ແລະ ຮີບດ່ວນ;

6. ແຕ່ງຕັ້ງ, ຍົກຍ້າຍ ຫຼື ປົດຕໍາແໜ່ງຜູ້ອໍານວຍການ, ຮັບຮອງເອົາການແຕ່ງຕັ້ງຮອງຜູ້ອໍານວຍການ ຕາມການສະເໜີຂອງຜູ້ອໍານວຍການ, ພ້ອມທັງປະເມີນການປະຕິບັດວຽກງານຂອງຄະນະອໍານວຍການໃນແຕ່ລະໄລຍະ ຢ່າງເປັນລາຍລັກອັກສອນ;

7. ກໍານົດທິດທາງໃນການບໍລິຫານຈັດການ ເພື່ອສະເໜີຕໍ່ກອງປະຊຸມໃຫຍ່ສະມາຊິກ;

8. ສະເໜີຮ່າງກົດລະບຽບພາຍໃນ ຕໍ່ກອງປະຊຸມໃຫຍ່ສະມາຊິກ ພິຈາລະນາ;

9. ກໍານົດແຜນການ ແລະ ມາດຕະການໃນການແກ້ໄຂ ຕາມຄໍາແນະນໍາ ຂອງຄະນະກວດກາ ຈາກທະນາຄານແຫ່ງ ສປປ ລາວ;

10. ຮັບຮອງແຜນການແກ້ໄຂບັນຫາໜີ້ທີ່ຖືກຈັດຊັ້ນເປັນໜີ້ທວງຍາກ;

11. ຮັບຜິດຊອບຕໍ່ຜົນເສຍຫາຍ ຊຶ່ງເກີດຈາກຄວາມຜິດພາດໃນການປະຕິບັດໜ້າທີ່ຂອງຕົນ;

12. ປະຕິບັດສິດ ແລະ ໜ້າທີ່ອື່ນ ຕາມລະບຽບການທີ່ກ່ຽວຂ້ອງ.

ສະພາບໍລິຫານ ບໍ່ສາມາດມອບໝາຍໜ້າທີ່ຂອງຕົນໃຫ້ບຸກຄົນອື່ນປະຕິບັດແທນໄດ້.

**ມາດຕາ 24 ກອງປະຊຸມສະພາບໍລິຫານ**

ສະພາບໍລິຫານຕ້ອງເປີດກອງປະຊຸມ ທຸກໆສາມເດືອນ ຫຼື ຈັດກອງປະຊຸມວິສາມັນ ຕາມຄຳສະເໜີຂອງສະມາຊິກສະພາບໍລິຫານ. ກອງປະຊຸມສະພາບໍລິຫານ ຈະໄຂຂຶ້ນໄດ້ກໍຕໍ່ເມື່ອ ຫາກມີສະມາຊິກເຂົ້າຮ່ວມຢ່າງໜ້ອຍ ສອງສ່ວນສາມ ຂອງສະມາຊິກສະພາບໍລິຫານທັງໝົດ. ມະຕິກອງປະຊຸມສະພາບໍລິຫານ ຈະມີຜົນສັກສິດໄດ້ກໍຕໍ່ເມື່ອໄດ້ຮັບຄະແນນສຽງສ່ວນຫຼາຍ ຈາກສະມາຊິກທີ່ເຂົ້າຮ່ວມກອງປະຊຸມ. ໃນກໍລະນີທີ່ມີຄະແນນສຽງເທົ່າກັນ ສຽງຂອງປະທານເປັນອັນຕັດສິນ.

ກອງປະຊຸມສະພາບໍລິຫານແຕ່ລະຄັ້ງ ຕ້ອງບັນທຶກມະຕິກອງປະຊຸມ, ປະທານສະພາບໍລິຫານ ເປັນຜູ້ຮັບຜິດຊອບຄວາມຖືກຕ້ອງ ແລະ ຄວາມໜ້າເຊື່ອຖືຂອງມະຕິດັ່ງກ່າວ.

**ມາດຕາ 25 ການພົ້ນຈາກຕຳແໜ່ງຂອງສະມາຊິກສະພາບໍລິຫານ**

ສະມາຊິກສະພາບໍລິຫານຈະພົ້ນຈາກຕຳແໜ່ງ ໃນກໍລະນີໃດໜຶ່ງ ດັ່ງນີ້:

1. ຄົບກຳນົດອາຍຸການ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 21 ຂອງຂໍ້ຕົກລົງສະບັບນີ້;
2. ລາອອກດ້ວຍຄວາມສະໝັກໃຈ;
3. ສິ້ນສຸດການເປັນສະມາຊິກ ຂອງສະຫະກອນສິນເຊື່ອ ແລະ ເງິນຝາກປະຢັດ;
4. ລະເມີດລະບຽບການ ຂອງສະຫະກອນສິນເຊື່ອ ແລະ ເງິນຝາກປະຢັດ;
5. ກອງປະຊຸມໃຫຍ່ສະມາຊິກມີມະຕິໃຫ້ປົດຕຳແໜ່ງ;
6. ຖືກສານຕັດສິນລົງໂທດ ຕັດອິດສະລະພາບ.

**ມາດຕາ 26 ຄະນະກຳມະການກວດກາພາຍໃນ**

ຄະນະກຳມະການກວດກາພາຍໃນ ປະກອບດ້ວຍສະມາຊິກ ຢ່າງໜ້ອຍ ສາມ ຄົນ ແລະ ຕ້ອງເປັນຈຳນວນຄີກ ຊຶ່ງຖືກເລືອກຕັ້ງ ຫຼື ປົດຕຳແໜ່ງ ໂດຍກອງປະຊຸມໃຫຍ່ສະມາຊິກ. ຄະນະກຳມະການກວດກາພາຍໃນ ຕ້ອງມີຄວາມຮູ້ພື້ນຖານ ແລະ ປະສົບການ ກ່ຽວກັບວຽກງານກວດກາ. ໃນນັ້ນ ປະທານຄະນະກຳມະການກວດກາພາຍໃນ ຕ້ອງມີປະສົບການດ້ານການເງິນ ແລະ ການບັນຊີ ຢ່າງໜ້ອຍ ສອງປີ.

ຄະນະກຳມະການກວດກາພາຍໃນ ມີອາຍຸການ ຫ້າ ປີ ແລະ ສາມາດຖືກຄັດເລືອກໃຫ້ດຳລົງຕຳແໜ່ງອີກ ແຕ່ບໍ່ເກີນ ສອງ ສະໄໝຕິດຕໍ່ກັນ.

ລະບຽບການເຄື່ອນໄຫວຂອງຄະນະກຳມະການກວດກາພາຍໃນ ໄດ້ກຳນົດໄວ້ໃນກົດລະບຽບພາຍໃນ.

**ມາດຕາ 27 ສິດ ແລະ ໜ້າທີ່ ຂອງຄະນະກຳມະການກວດກາພາຍໃນ**

ຄະນະກຳມະການກວດກາພາຍໃນ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ຄົ້ນຄວ້າ ສ້າງ ແລະ ປັບປຸງ ລະບຽບການກ່ຽວກັບການກວດກາ ເພື່ອສະເໜີຕໍ່ກອງປະຊຸມໃຫຍ່ສະມາຊິກ ພິຈາລະນາຮັບຮອງ;

2. ກວດກາການເຄື່ອນໄຫວວຽກງານ ຂອງສະຫະກອນສິນເຊື່ອ ແລະ ເງິນຝາກປະຢັດ ເປັນຕົ້ນການປະຕິບັດກົດລະບຽບພາຍໃນ, ນະໂຍບາຍ, ການເງິນ ແລະ ການບັນຊີ, ການນຳໃຊ້ທຶນ ແລະ ຊັບສິນ ຂອງສະຫະກອນສິນເຊື່ອ ແລະ ເງິນຝາກປະຢັດ;

3. ສະເໜີເປີດກອງປະຊຸມວິສາມັນ ເພື່ອພິຈາລະນາບັນຫາສຳຄັນ, ຈຳເປັນ ແລະ ຮີບດ່ວນ;

4. ເຂົ້າຮ່ວມ ກອງປະຊຸມສະພາບໍລິຫານ ແລະ ກອງປະຊຸມໃຫຍ່ສະມາຊິກ;

5. ຮຽກຜູ້ທີ່ກ່ຽວຂ້ອງ ໃນສະຫະກອນສິນເຊື່ອ ແລະ ເງິນຝາກປະຢັດ ຊີ້ແຈງບັນຫາ ແລະ ສະໜອງເອກະສານ, ຂໍ້ມູນຕ່າງໆທີ່ຕ້ອງການ ເພື່ອຮັບໃຊ້ວຽກງານກວດກາ ພ້ອມທັງຮັກສາຂໍ້ມູນດັ່ງກ່າວໃຫ້ເປັນຄວາມລັບ;

6. ກວດກາ ແລະ ປະເມີນການປະຕິບັດໜ້າທີ່ ຂອງສະມາຊິກສະພາບໍລິຫານ, ຄະນະກຳມະການສິນເຊື່ອ, ຄະນະອຳນວຍການ, ຄະນະພະແນກ ຫຼື ໜ່ວຍງານ ແລະ ພະນັກງານ ເປັນແຕ່ລະໄລຍະ;

7. ລາຍງານຜົນການກວດກາຕໍ່ກອງປະຊຸມໃຫຍ່ສະມາຊິກ ພ້ອມທັງສະເໜີມາດຕະການແກ້ໄຂຂໍ້ຄົງຄ້າງທີ່ພົບເຫັນ ແລະ ຕິດຕາມການແກ້ໄຂຂໍ້ຄົງຄ້າງດັ່ງກ່າວ;

8. ຕິດຕາມການແກ້ໄຂຂໍ້ຄົງຄ້າງ ຕາມຄຳແນະນຳ ຂອງຄະນະກວດກາ ທະນາຄານແຫ່ງ ສປປ ລາວ;

9. ສະເໜີກອງປະຊຸມໃຫຍ່ສະມາຊິກ ພິຈາລະນາວ່າຈ້າງບໍລິສັດກວດສອບພາຍນອກ ຕາມລະບຽບການ ຂອງທະນາຄານແຫ່ງ ສປປ ລາວ;

10. ຮັບຜິດຊອບຕໍ່ຜົນເສຍຫາຍ ທີ່ເກີດຈາກຄວາມຜິດພາດໃນການປະຕິບັດໜ້າທີ່ຂອງຕົນ;

11. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມລະບຽບການທີ່ກ່ຽວຂ້ອງ.

**ມາດຕາ 28 ຄະນະກຳມະການສິນເຊື່ອ**

ຄະນະກຳມະການສິນເຊື່ອ ປະກອບດ້ວຍສະມາຊິກ ຢ່າງໜ້ອຍ ສາມ ຄົນ ແລະ ຕ້ອງເປັນຈຳນວນຄີກ ຊຶ່ງຖືກເລືອກຕັ້ງ ຫຼື ປົດຕຳແໜ່ງ ໂດຍກອງປະຊຸມໃຫຍ່ສະມາຊິກ. ໃນນັ້ນ ສະມາຊິກ ໜຶ່ງ ຄົນ ຕ້ອງມີປະສົບການດ້ານສິນເຊື່ອ.

ຄະນະກຳມະການສິນເຊື່ອ ມີອາຍຸການ ຫ້າ ປີ ແລະ ສາມາດຖືກຄັດເລືອກໃຫ້ດຳລົງຕຳແໜ່ງອີກ ແຕ່ບໍ່ເກີນ ສອງ ສະໄໝຕິດຕໍ່ກັນ.

ລະບຽບການເຄື່ອນໄຫວຂອງຄະນະກຳມະການສິນເຊື່ອ ໄດ້ກຳນົດໄວ້ໃນກົດລະບຽບພາຍໃນ.

**ມາດຕາ 29 ສິດ ແລະ ໜ້າທີ່ ຂອງຄະນະກຳມະການສິນເຊື່ອ**

ຄະນະກຳມະການສິນເຊື່ອ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ສະເໜີກອງປະຊຸມໃຫຍ່ສະມາຊິກ ພິຈາລະນາຮັບຮອງ ເອົານະໂຍບາຍ, ຄູ່ມື ແລະ ຂັ້ນຕອນໃນການພິຈາລະນາປ່ອຍເງິນກູ້;

2. ຄົ້ນຄວ້າ, ວິເຄາະ ແລະ ພິຈາລະນາປ່ອຍເງິນກູ້ ໃຫ້ແກ່ສະມາຊິກ;

3. ຕິດຕາມການບໍລິຫານ ແລະ ຄຸນນະພາບຂອງສິນເຊື່ອ ທີ່ໄດ້ປ່ອຍກູ້ໃຫ້ສະມາຊິກ ຢ່າງເປັນປົກກະຕິ;

4. ຕິດຕາມການຈັດຊັ້ນໜີ້ ແລະ ຫັກເງິນແຮໜີ້ທີ່ຖືກຈັດຊັ້ນ ຕາມລະບຽບການຂອງທະນາຄານແຫ່ງ ສປປ ລາວ;

5. ລາຍງານສະພາບການປ່ອຍສິນເຊື່ອ, ການບໍລິຫານສິນເຊື່ອ ແລະ ຂໍ້ແຜນແກ້ໄຂບັນຫາໜີ້ທວງຍາກ;

6. ໃຫ້ຄຳປຶກສາ ແລະ ແນະນຳ ພະນັກງານສິນເຊື່ອ ໃນການດຳເນີນການປ່ອຍສິນເຊື່ອ, ການເກັບຮັກສາຂໍ້ມູນ ແລະ ເອກະສານໃບຄຳຮ້ອງຂໍກູ້ເງິນ;

7. ໃຫ້ຄຳປຶກສາ ແລະ ແນະນຳແກ່ສະມາຊິກ ໃນການນຳໃຊ້ເງິນກູ້ຢ່າງມີປະສິດທິຜົນ;

8. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມລະບຽບການທີ່ກ່ຽວຂ້ອງ.

**ມາດຕາ 30 ຄະນະອຳນວຍການ**

ຄະນະອຳນວຍການປະກອບດ້ວຍ ຜູ້ອຳນວຍການ ແລະ ຮອງຜູ້ອຳນວຍການ ຊຶ່ງຖືກແຕ່ງຕັ້ງ ຫຼື ປົດຕຳແໜ່ງໂດຍສະພາບໍລິຫານ. ຄະນະອຳນວຍການ ມີອາຍຸການ ສາມ ປີ ແລະ ສາມາດຖືກແຕ່ງຕັ້ງຄືນໃໝ່ໄດ້.

ຄະນະອຳນວຍການ ເປັນຜູ້ບໍລິຫານຈັດການວຽກງານປະຈຳວັນຂອງສະຫະກອນສິນເຊື່ອ ແລະ ເງິນຝາກປະຢັດ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ, ກົດລະບຽບພາຍໃນ ແລະ ຕາມການມອບໝາຍຂອງສະພາບໍລິຫານ.

**ມາດຕາ 31 ເງື່ອນໄຂຂອງຄະນະອຳນວຍການ**

ຄະນະອຳນວຍການຂອງສະຫະກອນສິນເຊື່ອ ແລະ ເງິນຝາກປະຢັດ ມີເງື່ອນໄຂ ດັ່ງນີ້:

1. ມີຄວາມຮູ້, ຄວາມສາມາດ ແລະ ປະສົບການທາງດ້ານການບໍລິຫານ, ການເງິນ, ການທະນາຄານ ແລະ ວຽກງານສະຫະກອນ;

2. ມີຄວາມສາມາດທາງດ້ານການປະພຶດ;

3. ບໍ່ເປັນບຸກຄົນລົ້ມລະລາຍ ຫຼື ເປັນຜູ້ບໍລິຫານໃນສະຖາບັນການເງິນທີ່ລົ້ມລະລາຍ;

4. ບໍ່ເຄີຍຖືກກອງປະຊຸມສະພາບໍລິຫານມີມະຕິໃຫ້ປົດຕຳແໜ່ງ ຫຼື ຖືກສານຕັດສິນລົງ ໂທດທາງອາຍາ ໃນສະຖານລັກຊັບ, ສໍ້ໂກງຊັບ, ຍັກຍອກຊັບ, ປອມແປງເອກະສານ, ຮັບ ຫຼື ໃຫ້ສິນບົນ, ສໍ້ລາດບັງຫຼວງ ຫຼື ຟອກເງິນ;

5. ມີຄວາມຮູ້ພື້ນຖານໃນການນຳໃຊ້ ຄອມພິວເຕີ ແລະ ໂປຣແກຣມບັນຊີ;

6. ບໍ່ເປັນຜູ້ບໍລິຫານ, ທີ່ປຶກສາ ຫຼື ພະນັກງານ ໃນອົງກອນອື່ນ.

**ມາດຕາ 32 ສິດ ແລະ ໜ້າທີ່ ຂອງຜູ້ອຳນວຍການ**

ຜູ້ອຳນວຍການ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ຜັນຂະຫຍາຍ ແລະ ຈັດຕັ້ງປະຕິບັດມະຕິກອງປະຊຸມສະພາບໍລິຫານ;

2. ບໍລິຫານວຽກງານປະຈຳວັນ, ກະກຽມຈັດກອງປະຊຸມສະພາບໍລິຫານ, ກອງປະຊຸມໃຫຍ່ສະມາຊິກ ແລະ ຮັບຜິດຊອບວຽກງານອື່ນ ທີ່ສະພາບໍລິຫານມອບໝາຍໃຫ້;

3. ສ້າງ ຫຼື ດັດແກ້ ແຜນດຳເນີນທຸລະກິດ ແລະ ແຜນການເຄື່ອນໄຫວປະຈຳປີ ເພື່ອສະເໜີຄະນະສະພາບໍລິຫານຮັບຮອງ;

4. ຄຸ້ມຄອງການນຳໃຊ້ ຊັບສິນ ແລະ ທຶນ ຂອງສະຫະກອນສິນເຊື່ອ ແລະ ເງິນຝາກປະຢັດ;

5. ເຂົ້າຮ່ວມກອງປະຊຸມໃຫຍ່ສະມາຊິກ, ກອງປະຊຸມສະພາບໍລິຫານ ຫຼື ກອງປະຊຸມອື່ນ ທີ່ກ່ຽວຂ້ອງກັບວຽກງານສະຫະກອນສິນເຊື່ອ ແລະ ເງິນຝາກປະຢັດ;

6. ສະໜອງຂໍ້ມູນ ແລະ ໃຫ້ຄຳຊີ້ແຈງບັນຫາຕ່າງໆ ທີ່ກອງປະຊຸມໃຫຍ່ສະມາຊິກ, ສະພາບໍລິຫານ, ແລະ ຄະນະກຳມະການກວດກາພາຍໃນ ມີຄວາມສົນໃຈ;

7. ສະເໜີແຕ່ງຕັ້ງ ຫຼື ປົດຕຳແໜ່ງ ຮອງຜູ້ອຳນວຍການ ເພື່ອສະເໜີສະພາບໍລິຫານພິຈາລະນາຮັບຮອງ;

8. ສະເໜີ ຈ້າງ, ບັນຈຸ, ສັບຊ້ອນ ຫຼື ເລີກຈ້າງ ພະນັກງານ ຕາມທີ່ໄດ້ກຳນົດໄວ້ໃນກົດລະບຽບພາຍໃນ;

9. ສະເໜີປະຕິບັດນະໂຍບາຍເງິນເດືອນ, ເງິນອຸດໜູນ, ຍ້ອງຍໍ, ເລື່ອນຊັ້ນ ແລະ ນະໂຍບາຍອື່ນລວມທັງວິໄນຕໍ່ພະນັກງານ ໃຫ້ສະພາບໍລິຫານພິຈາລະນາອະນຸມັດ;

10. ຕາງໜ້າໃຫ້ ສະຫະກອນສິນເຊື່ອ ແລະ ເງິນຝາກປະຢັດ ໃນການພົວພັນ ແລະ ເຊັນສັນຍາຕ່າງໆ ຕາມການມອບໝາຍຂອງສະພາບໍລິຫານ;

11. ອອກ ແລະ ປັບປຸງເນື້ອໃນໃບຮຸ້ນ ໃຫ້ແກ່ສະມາຊິກ;

12. ຮັບຜິດຊອບຕໍ່ຜົນເສຍຫາຍ ທີ່ເກີດຈາກຄວາມຜິດພາດໃນການບໍລິຫານວຽກງານຂອງຕົນ;

13. ສະຫຼຸບ ແລະ ລາຍງານ ການເຄື່ອນໄຫວການດຳເນີນທຸລະກິດ ຕໍ່ສະພາບໍລິຫານ ຢ່າງເປັນລາຍລັກອັກສອນ ເປັນປະຈຳເດືອນ, ໄຕມາດ ແລະ ປີ;

14. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມລະບຽບການທີ່ກ່ຽວຂ້ອງ.

ຮອງຜູ້ອຳນວຍການ ມີໜ້າທີ່ຊ່ວຍຜູ້ອຳນວຍການໃນການບໍລິຫານວຽກງານປະຈຳວັນຂອງສະຫະກອນສິນເຊື່ອ ແລະ ເງິນຝາກປະຢັດ ຕາມການມອບໝາຍຢ່າງເປັນລາຍລັກອັກສອນ ຂອງຜູ້ອຳນວຍການ ທັງເປັນຜູ້ຮັກສາການແທນໃນກໍລະນີຜູ້ອຳນວຍການ ຕິດຂັດ.

**ມາດຕາ 33 ພະແນກ ຫຼື ໜ່ວຍງານ**

ສະຫະກອນສິນເຊື່ອ ແລະ ເງິນຝາກປະຢັດ ປະກອບດ້ວຍພະແນກ ຫຼື ໜ່ວຍງານ ເພື່ອຮັບຜິດຊອບວຽກງານຈຳນວນໜຶ່ງ. ສິດ, ໜ້າທີ່ ແລະ ລະບຽບການເຄື່ອນໄຫວ ຂອງພະແນກ ຫຼື ໜ່ວຍງານດັ່ງກ່າວ ໄດ້ກຳນົດໄວ້ໃນກົດລະບຽບພາຍໃນ.

## ໝວດທີ 4
## ສະມາຊິກ

**ມາດຕາ 34 ການສະໝັກເປັນສະມາຊິກ**

ຜູ້ທີ່ມີຈຸດປະສົງເຂົ້າເປັນສະມາຊິກສະຫະກອນສິນເຊື່ອ ແລະ ເງິນຝາກປະຢັດ ຕ້ອງຍື່ນໃບສະໝັກເຂົ້າເປັນສະມາຊິກ ຕາມທີ່ໄດ້ກຳນົດໄວ້ໃນກົດລະບຽບພາຍໃນ ຂອງສະຫະກອນສິນເຊື່ອ ແລະ ເງິນຝາກປະຢັດ.

ມາດຕາ 35 ເງື່ອນໄຂຂອງການເປັນສະມາຊິກ

ສະມາຊິກຂອງສະຫະກອນສິນເຊື່ອ ແລະ ເງິນຝາກປະຢັດ ຕ້ອງມີເງື່ອນໄຂ ດັ່ງນີ້:

1. ເປັນ ບຸກຄົນ, ກອງທຶນພັດທະນາບ້ານ ຫຼື ທະນາຄານບ້ານ ຫຼື ນິຕິບຸກຄົນອື່ນ;

2. ເປັນພົນລະເມືອງລາວ ທີ່ມີອາຍຸ ສິບແປດ ປີ ຂຶ້ນໄປ, ມີຄວາມສາມາດທາງດ້ານການປະພຶດ ແລະ ດຳລົງຊີວິດຢູ່ ສປປ ລາວ;

3. ມີທີ່ຢູ່ອາໄສໃນຂົງເຂດເມືອງດຽວກັນ ຫຼື ອົງກອນດຽວກັນ;

4. ເງື່ອນໄຂອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດລະບຽບພາຍໃນ.

ມາດຕາ 36 ສິດ ແລະ ພັນທະ ຂອງສະມາຊິກ

ສະມາຊິກສະຫະກອນສິນເຊື່ອ ແລະ ເງິນຝາກປະຢັດ ມີ ສິດ ແລະ ພັນທະ ດັ່ງນີ້:

1. ເຂົ້າຮ່ວມໃນກິດຈະກຳທີ່ກ່ຽວຂ້ອງ ຂອງສະຫະກອນສິນເຊື່ອ ແລະ ເງິນຝາກປະຢັດ;

2. ສະເໜີເປີດກອງປະຊຸມວິສາມັນ;

3. ລົງຄະແນນສຽງຮັບຮອງເອົາມະຕິກອງປະຊຸມໃຫຍ່ສະມາຊິກ;

4. ໄດ້ຮັບ ໃບຮຸ້ນ, ເງິນປັນຜົນ ຫຼື ຜົນປະໂຫຍດອື່ນ ຢ່າງຄົບຖ້ວນ;

5. ໄດ້ຮັບການບໍລິການທາງດ້ານການເງິນ, ການຝຶກອົບຮົມທາງດ້ານເຕັກນິກວິຊາການ, ການປົກປ້ອງສິດ ແລະ ຜົນປະໂຫຍດອັນຊອບທຳທາງດ້ານກົດໝາຍ;

6. ສະໝັກໃຈ ແລະ ໄດ້ຮັບເລືອກຕັ້ງ ເປັນສະມາຊິກສະພາບໍລິຫານ, ຄະນະກຳມະການກວດກາພາຍໃນ ຫຼື ຄະນະກຳມະການສິນເຊື່ອ;

7. ຕິດຕາມ ກວດກາ ແລະ ປະເມີນຜົນການດຳເນີນງານ ຂອງສະຫະກອນສິນເຊື່ອ ແລະ ເງິນຝາກປະຢັດ;

8. ລາອອກຈາກການເປັນສະມາຊິກ ດ້ວຍຮູບການຂາຍຮຸ້ນໃຫ້ແກ່ສະມາຊິກດ້ວຍກັນ;

9. ເຂົ້າຮ່ວມ ຫຼື ແຕ່ງຕັ້ງຜູ້ຕາງໜ້າ ເຂົ້າຮ່ວມກອງປະຊຸມໃຫຍ່ສະມາຊິກ ລວມທັງປະຕິບັດ ສິດ ແລະ ພັນທະ ຕາມທີ່ໄດ້ກຳນົດໄວ້ໃນມາດຕານີ້;

10. ສະເໜີ ແລະ ປະກອບຄຳເຫັນດ້ານຕ່າງໆ ລວມທັງບັນຫາກ່ຽວກັບການປົກປ້ອງສິດ ແລະ ຜົນປະໂຫຍດຂອງຕົນ;

11. ຮັກສາຄວາມສາມັກຄີ, ຊ່ວຍເຫຼືອຊຶ່ງກັນ ແລະ ກັນ, ໃຫ້ຄວາມຮ່ວມມື ແລະ ສະໜັບສະໜູນການດຳເນີນທຸລະກິດ ຂອງສະຫະກອນສິນເຊື່ອ ແລະ ເງິນຝາກປະຢັດ ແລະ ສະມາຊິກດ້ວຍກັນ;

12. ຊຳລະມູນຄ່າຮຸ້ນ ຕາມຈຳນວນຮຸ້ນທີ່ຈະຖືໃຫ້ຄົບຖ້ວນ ແຕ່ລະໄລຍະ;

13. ຮັບຜິດຊອບຕໍ່ໜີ້ສິນ ຂອງສະຫະກອນສິນເຊື່ອ ແລະ ເງິນຝາກປະຢັດ ຕາມມູນຄ່າຮຸ້ນທັງໝົດທີ່ຕົນຖື ຫຼື ເທົ່າກັບຈຳນວນຮຸ້ນ ທີ່ຍັງບໍ່ທັນຖອກເຕັມ;

14. ນຳໃຊ້ ສິດ ແລະ ປະຕິບັດພັນທະອື່ນ ຕາມລະບຽບການທີ່ກ່ຽວຂ້ອງ.

ມາດຕາ 37 ການສິ້ນສຸດການເປັນສະມາຊິກ

ສະມາຊິກຂອງສະຫະກອນສິນເຊື່ອ ແລະ ເງິນຝາກປະຢັດ ຈະສິ້ນສຸດການເປັນສະມາຊິກ ໃນກໍລະນີໃດໜຶ່ງ ດັ່ງນີ້:

1. ລາອອກດ້ວຍຄວາມສະໝັກໃຈ ໂດຍໄດ້ຮັບການເຫັນດີຈາກສະພາບໍລິຫານ;
2. ຂາດຄວາມສາມາດທາງດ້ານການປະພຶດ;
3. ເສຍຊີວິດ ຫຼື ຫາຍສາບສູນ;
4. ຖືກສານຕັດສິນລົງໂທດຕັດອິດສະລະພາບ;
5. ລະເມີດລະບຽບການ ຂອງສະຫະກອນສິນເຊື່ອ ແລະ ເງິນຝາກປະຢັດ.

## ໝວດທີ 5
## ການດຳເນີນທຸລະກິດ

ມາດຕາ 38 ຂອບເຂດການດຳເນີນທຸລະກິດ

ຂອບເຂດການດຳເນີນທຸລະກິດ ຂອງສະຫະກອນສິນເຊື່ອ ແລະ ເງິນຝາກປະຢັດ ມີ ດັ່ງນີ້:

1. ຮັບເງິນຝາກເປັນເງິນກີບ ຈາກສະມາຊິກ;
2. ປ່ອຍເງິນກູ້ເປັນເງິນກີບ ໃຫ້ແກ່ສະມາຊິກ;
3. ເປັນຕົວແທນປະກັນໄພ;
4. ເປັນຕົວແທນໃຫ້ບໍລິການຊຳລະ;
5. ບໍລິການໃຫ້ຄຳປຶກສາດ້ານວິຊາການ ໃຫ້ແກ່ກຸ່ມທ້ອນເງິນ, ກອງທຶນພັດທະນາບ້ານ ຫຼື ທະນາຄານບ້ານ ທີ່ເປັນສະມາຊິກ;
6. ໃຫ້ບໍລິການທາງດ້ານເງິນຮູບແບບອື່ນ ຕາມການອະນຸຍາດ ຂອງທະນາຄານແຫ່ງ ສປປ ລາວ.

ມາດຕາ 39 ການຮັບເງິນຝາກ ແລະ ການປ່ອຍເງິນກູ້

ການຮັບເງິນຝາກ ແມ່ນການໃຫ້ບໍລິການເປີດບັນຊີເງິນຝາກ ຂອງສະຫະກອນສິນເຊື່ອ ແລະ ເງິນຝາກປະຢັດ ໃຫ້ແກ່ສະມາຊິກ ຊຶ່ງປະກອບມີ ເງິນຝາກປະຢັດ ແລະ ເງິນຝາກປະຈຳ.

ສະຫະກອນສິນເຊື່ອ ແລະ ເງິນຝາກປະຢັດ ສາມາດປ່ອຍເງິນກູ້ປະເພດຕ່າງໆ ໃຫ້ແກ່ສະມາຊິກຂອງຕົນ ໂດຍສອດຄ່ອງກັບລະບຽບການ ທີ່ທະນາຄານແຫ່ງ ສປປ ລາວ ວາງອອກ.

ມາດຕາ 40 ປຶ້ມບັນຊີເງິນຝາກ

ປຶ້ມບັນຊີເງິນຝາກ ແມ່ນເອກະສານສັນຍາປະເພດໜຶ່ງ ທີ່ສະຫະກອນສິນເຊື່ອ ແລະ ເງິນຝາກປະຢັດອອກໃຫ້ແກ່ສະມາຊິກ ເພື່ອຢັ້ງຢືນການຮັບຝາກເງິນແຕ່ລະປະເພດ ຈາກສະມາຊິກໃນແຕ່ລະໄລຍະ ໂດຍມີເນື້ອໃນຕົ້ນຕໍ ດັ່ງນີ້:

1. ຊື່ ແລະ ນາມສະກຸນ ຂອງຜູ້ຝາກເງິນ;

2. ປະເພດເງິນຝາກ;

3. ຈຳນວນເງິນຝາກ ແລະ ອັດຕາດອກເບ້ຍ;

4. ການຄິດໄລ່ອັດຕາດອກເບ້ຍເງິນຝາກ;

5. ຈຳນວນເງິນຝາກຕ່ຳສຸດ ແລະ ເງື່ອນໄຂການຖອນເງິນຝາກ;

6. ໄລຍະເວລາຂອງການຝາກເງິນ.

ສະຫະກອນສິນເຊື່ອ ແລະ ເງິນຝາກປະຢັດ ຕ້ອງແຈ້ງເວລາ ທີ່ຈະໝົດກຳນົດເງິນຝາກປະຈຳ ໃຫ້ສະມາຊິກຂອງຕົນຊາບກ່ອນລ່ວງໜ້າ ສິບຫ້າ ວັນ ເພື່ອຈະສືບຕໍ່ຝາກ ຫຼື ຖອນເງິນດັ່ງກ່າວ.

## ມາດຕາ 41 ສັນຍາກູ້ຢືມ

ສັນຍາກູ້ຢືມຕ້ອງເຮັດເປັນລາຍລັກອັກສອນ ໂດຍມີລາຍເຊັນຂອງ ຜູ້ກູ້ຢືມ, ຜູ້ຄ້ຳປະກັນ ແລະ ຜູ້ຕາງໜ້າຂອງສະຫະກອນສິນເຊື່ອ ແລະ ເງິນຝາກປະຢັດ ຕາມທີ່ໄດ້ກຳນົດໄວ້ໃນກົດລະບຽບພາຍໃນ ໂດຍມີເນື້ອໃນຕົ້ນຕໍ ດັ່ງນີ້:

1. ຊື່ ແລະ ນາມສະກຸນ, ທີ່ຢູ່, ເລກທີ ບັດປະຈຳຕົວ ຫຼື ສຳມະໂນຄົວ ແລະ ເບີໂທລະສັບ ຂອງຜູ້ກູ້ຢືມ ແລະ ຜູ້ຄ້ຳປະກັນ;

2. ຈຳນວນເງິນຕົ້ນທຶນໃຫ້ກູ້ຢືມ ແລະ ເປົ້າໝາຍຂອງການນຳໃຊ້ເງິນກູ້ຢືມ;

3. ກຳນົດເວລາໃນການຊຳລະຄືນເງິນກູ້ຢືມ, ຕົ້ນທຶນ, ດອກເບ້ຍເງິນກູ້ ຕະຫຼອດໄລຍະເວລາຂອງເງິນກູ້, ການປັບໃໝ ແລະ ຄ່າບໍລິການອື່ນທີ່ຕ້ອງຈ່າຍ (ຖ້າມີ);

4. ປະເພດຫຼັກຊັບຄ້ຳປະກັນ ແລະ ມູນຄ່າການຄ້ຳປະກັນ;

5. ໜັງສືຍິນຍອມຂອງຜູ້ກູ້ຢືມ, ຜູ້ກູ້ຢືມຮ່ວມ ແລະ ຜູ້ຄ້ຳປະກັນ ອະນຸຍາດໃຫ້ຄົ້ນຫາຂໍ້ມູນຈາກບໍລິສັດຂໍ້ມູນຂ່າວສານສິນເຊື່ອ ແຫ່ງ ສປປ ລາວ;

6. ວິທີແກ້ໄຂຂໍ້ຂັດແຍ່ງ.

## ມາດຕາ 42 ການກຳນົດອັດຕາດອກເບ້ຍ ແລະ ຄ່າບໍລິການ

ສະຫະກອນສິນເຊື່ອ ແລະ ເງິນຝາກປະຢັດ ສາມາດກຳນົດອັດຕາດອກເບ້ຍ ແລະ ຄ່າບໍລິການ ຕາມມະຕິກອງປະຊຸມໃຫຍ່ສະມາຊິກ ບົນພື້ນຖານກົນໄກເສດຖະກິດຕະຫຼາດ ທີ່ເໝາະສົມກັບສະພາບເສດຖະກິດແຕ່ລະໄລຍະ ໂດຍສອດຄ່ອງກັບລະບຽບການ ທີ່ທະນາຄານແຫ່ງ ສປປ ລາວ ວາງອອກ.

## ມາດຕາ 43 ການລະດົມທຶນ

ສະຫະກອນສິນເຊື່ອ ແລະ ເງິນຝາກປະຢັດ ສາມາດຊອກລະດົມທຶນດ້ວຍຮູບການ ດັ່ງນີ້:

1. ລະດົມທຶນຈາກສະມາຊິກ;

2. ໄດ້ຮັບການບໍລິຈາກ ຫຼື ທຶນຊ່ວຍເຫຼືອລ້າ ຈາກອົງການຈັດຕັ້ງພາຍໃນ ຫຼື ຕ່າງປະເທດ ແຕ່ຕ້ອງຮູ້ໄດ້ເຖິງແຫຼ່ງທີ່ມາຂອງທຶນຊ່ວຍເຫຼືອດັ່ງກ່າວ ແລະ ໄດ້ຮັບການເຫັນດີ ຈາກກົມຄຸ້ມຄອງສະຖາບັນການເງິນ ຫຼື ສາຂາທະນາຄານແຫ່ງ ສປປ ລາ ຢູ່ທ້ອງຖິ່ນ;

3. ກູ້ຢືມທັງພາຍໃນ ແລະ ຕ່າງປະເທດ ໂດຍໄດ້ຮັບອະນຸຍາດ ຈາກກົມຄຸ້ມຄອງສະຖາບັນການເງິນ ຫຼື ສາຂາທະນາຄານແຫ່ງ ສປປ ລາວ ຢູ່ທ້ອງຖິ່ນ.

**ມາດຕາ 44 ການລົງທຶນໃນວິສາຫະກິດ**

ສະຫະກອນສິນເຊື່ອ ແລະ ເງິນຝາກປະຢັດ ທີ່ມີຄວາມເຂັ້ມແຂງທາງດ້ານການເງິນ ສາມາດລົງທຶນໃນວິສາຫະກິດຂອງສະມາຊິກຕົນໂດຍປະກອບເປັນທຶນໝູນວຽນ ເພື່ອຊຸກຍູ້ການຂະຫຍາຍກິດຈະການຂອງສະມາຊິກ.

ອັດຕາສ່ວນໃນການຖືຮຸ້ນໃນວິສາຫະກິດໜຶ່ງ ບໍ່ໃຫ້ເກີນ ສິບສ່ວນຮ້ອຍ ຂອງທຶນທັງໝົດ ຂອງສະຫະກອນສິນເຊື່ອ ແລະ ເງິນຝາກປະຢັດ ແລະ ການຖືຮຸ້ນໃນວິສາຫະກິດທັງໝົດ ບໍ່ໃຫ້ເກີນ ສາມສິບ ສ່ວນຮ້ອຍ ຂອງທຶນທັງໝົດ ຂອງສະຫະກອນສິນເຊື່ອ ແລະ ເງິນຝາກປະຢັດ ດັ່ງກ່າວ.

ສະຫະກອນສິນເຊື່ອ ແລະ ເງິນຝາກປະຢັດ ຕ້ອງໄດ້ຮັບອະນຸຍາດກ່ຽວກັບການລົງທຶນຂອງຕົນ ຈາກກົມຄຸ້ມຄອງສະຖາບັນການເງິນ ຫຼື ສາຂາທະນາຄານແຫ່ງ ສປປ ລາວ ຢູ່ທ້ອງຖິ່ນ.

**ມາດຕາ 45 ການເກັບຮັກສາເອກະສານ ແລະ ຂໍ້ມູນທຸລະກຳ**

ສະຫະກອນສິນເຊື່ອ ແລະ ເງິນຝາກປະຢັດ ຕ້ອງເກັບຮັກສາເອກະສານ ແລະ ສ້າງລະບົບຂໍ້ມູນໄວ້ໃນສຳນັກງານຂອງຕົນ ຊຶ່ງປະກອບດ້ວຍ:

1. ກົດລະບຽບພາຍໃນ ແລະ ລະບຽບການອື່ນໆ ກ່ຽວກັບການຄຸ້ມຄອງບໍລິຫານ;
2. ບົດລາຍງານ ແລະ ບົດບັນທຶກກອງປະຊຸມຕ່າງໆ;
3. ບົດລາຍງານການເງິນ ແລະ ການບັນຊີ, ບັນຊີລາຍຊື່ສະມາຊິກ, ເອກະສານເງິນກູ້, ການຫັກລ້າງໜີ້ສູນ, ການປັບປຸງໂຄງສ້າງໜີ້ ແລະ ການເກັບກູ້ໜີ້ຄືນ.

ກຳນົດເວລາໃນການເກັບຮັກສາເອກະສານ ແລະ ຂໍ້ມູນທຸລະກຳ ໃຫ້ປະຕິບັດຕາມລະບຽບການທີ່ກ່ຽວຂ້ອງ.

**ມາດຕາ 46 ພາສາທີ່ໃຊ້ທາງການ**

ທຸກເອກະສານກ່ຽວກັບການເຄື່ອນໄຫວຂອງສະຫະກອນສິນເຊື່ອ ແລະ ເງິນຝາກປະຢັດ ຕ້ອງເຮັດເປັນພາສາລາວ.

**ມາດຕາ 47 ການຍົກຍ້າຍທີ່ຕັ້ງສຳນັກງານ**

ສະຫະກອນສິນເຊື່ອ ແລະ ເງິນຝາກປະຢັດ ທີ່ມີຈຸດປະສົງຍົກຍ້າຍທີ່ຕັ້ງສຳນັກງານ ຕ້ອງສະເໜີກົມຄຸ້ມຄອງສະຖາບັນການເງິນ ຫຼື ສາຂາທະນາຄານແຫ່ງ ສປປ ລາວ ຢູ່ທ້ອງຖິ່ນ ພິຈາລະນາອະນຸມັດ.

**ມາດຕາ 48 ການເປັນສະມາຊິກສະມາຄົມສະຫະກອນສິນເຊື່ອ ແລະ ເງິນຝາກປະຢັດ ສປປ ລາວ**

ສະຫະກອນສິນເຊື່ອ ແລະ ເງິນຝາກປະຢັດ ສາມາດສະໝັກເຂົ້າເປັນສະມາຊິກ ຂອງສະມາຄົມສະຫະກອນສິນເຊື່ອ ແລະ ເງິນຝາກປະຢັດ ສປປ ລາວ ຕາມລະບຽບການທີ່ກ່ຽວຂ້ອງ.

## ໝວດທີ 6
## ການຮັກສາຄວາມໝັ້ນຄົງ, ການຈັດຊັ້ນໜີ້ ແລະ ການຫັກເງິນແຮໜີ້ທີ່ຖືກຈັດຊັ້ນ

**ມາດຕາ 49 ການຮັກສາຄວາມໝັ້ນຄົງ**

ສະຫະກອນສິນເຊື່ອ ແລະ ເງິນຝາກປະຢັດ ຕ້ອງປະຕິບັດອັດຕາສ່ວນຄວາມໝັ້ນຄົງຕາມລະບຽບການ ທີ່ທະນາຄານແຫ່ງ ສປປ ລາວ ວາງອອກ.

**ມາດຕາ 50 ການຈັດຊັ້ນໜີ້ ແລະ ການຫັກເງິນແຮໜີ້ທີ່ຖືກຈັດຊັ້ນ**

ສະຫະກອນສິນເຊື່ອ ແລະ ເງິນຝາກປະຢັດ ຕ້ອງປະຕິບັດການຈັດຊັ້ນໜີ້ ແລະ ການຫັກຄັງແຮໜີ້ທີ່ຖືກຈັດຊັ້ນ ຕາມລະບຽບການ ທີ່ທະນາຄານແຫ່ງ ສປປ ລາວ ວາງອອກ.

**ມາດຕາ 51 ການຮັກສາຄວາມລັບ**

ຜູ້ບໍລິຫານ, ພະນັກງານ ແລະ ຜູ້ຖືກມອບໝາຍ ທີ່ພວມປະຕິບັດ ຫຼື ພົ້ນຈາກການປະຕິບັດໜ້າທີ່ຢູ່ ສະຫະກອນສິນເຊື່ອ ແລະ ເງິນຝາກປະຢັດ ໄປແລ້ວ ຕ້ອງຮັກສາຂໍ້ມູນທີ່ເປັນຄວາມລັບ, ຫ້າມເປີດເຜີຍ ຫຼື ນໍາໃຊ້ຂໍ້ມູນ ເພື່ອຜົນປະໂຫຍດຂອງຕົນເອງ ຫຼື ຜູ້ອື່ນ ເວັ້ນເສຍແຕ່ເພື່ອຜົນປະໂຫຍດຂອງສະຫະກອນສິນເຊື່ອ ແລະ ເງິນຝາກປະຢັດດັ່ງກ່າວ. ຂໍ້ມູນທີ່ເປັນຄວາມລັບ ສາມາດເປີດເຜີຍໃຫ້ທະນາຄານແຫ່ງ ສປປ ລາວ, ຜູ້ກວດສອບ ຫຼື ອົງການທີ່ມີສິດອໍານາດໄດ້ຕາມກົດໝາຍ. ຜູ້ທີ່ໄດ້ຮັບຂໍ້ມູນ ຕ້ອງຮັກສາຂໍ້ມູນດັ່ງກ່າວເປັນຄວາມລັບ ຍົກເວັ້ນກໍລະນີທີ່ຕ້ອງເປີດເຜີຍຕາມກົດໝາຍ.

## ໝວດທີ 7
## ການບັນຊີ, ການລາຍງານ ແລະ ການກວດສອບໂດຍບໍລິສັດກວດສອບພາຍນອກ

**ມາດຕາ 52 ລາຍຮັບ ແລະ ລາຍຈ່າຍ**

ລາຍຮັບ ແລະ ລາຍຈ່າຍ ຂອງສະຫະກອນສິນເຊື່ອ ແລະ ເງິນຝາກປະຢັດ ມີ ດັ່ງນີ້:

1. ລາຍຮັບ:
   - 1.1 ດອກເບ້ຍເງິນກູ້;
   - 1.2 ຄ່າທໍານຽມ ແລະ ຄ່າບໍລິການ;
   - 1.3 ລາຍຮັບອື່ນ ຕາມກົດໝາຍ.
2. ລາຍຈ່າຍ:
   - 2.1 ດອກເບ້ຍເງິນຝາກ;
   - 2.2 ການດໍາເນີນງານ;
   - 2.3 ການສ້າງຄັງແຮຕາມລະບຽບການ;

2.4 ຄ່າເສື່ອມມູນຄ່າຊັບສິນ ແລະ ຫັກຄ່າຫຼຸ້ຍຫ້ຽນຊັບສິນບັດຄ້າງທີ່;

2.5 ລາຍຈ່າຍອື່ນ ຕາມກົດໝາຍ.

**ມາດຕາ 53 ກຳໄລ ແລະ ຂາດທຶນ**

ກຳໄລຂອງສະຫະກອນສິນເຊື່ອ ແລະ ເງິນຝາກປະຢັດ ແມ່ນສ່ວນຜິດດ່ຽງເປັນບວກ ລະຫວ່າງ ຍອດລາຍຮັບ ແລະ ຍອດລາຍຈ່າຍໃນປີ. ກຳໄລສຸດທິ ແມ່ນກຳໄລພາຍຫຼັງທີ່ໄດ້ຫັກອາກອນກຳໄລໃຫ້ລັດແລ້ວ.

ການຂາດທຶນຂອງສະຫະກອນສິນເຊື່ອ ແລະ ເງິນຝາກປະຢັດ ແມ່ນສ່ວນຜິດດ່ຽງເປັນລົບ ລະຫວ່າງ ຍອດລາຍຮັບ ແລະ ຍອດລາຍຈ່າຍໃນປີ. ການຂາດທຶນສະສົມ ແມ່ນການຂາດທຶນທີ່ໄດ້ສະສົມໃນປີຜ່ານມາ.

ໃນກໍລະນີທີ່ຂາດທຶນສະສົມ ໃຫ້ສະຫະກອນສິນເຊື່ອ ແລະ ເງິນຝາກປະຢັດ ນຳໃຊ້ຄັງສຳຮອງຕາມລະບຽບການ ເພື່ອລ້າງການຂາດທຶນດັ່ງກ່າວ, ຖ້າເງິນໃນຄັງສຳຮອງບໍ່ພຽງພໍ ກໍໃຫ້ເພີ່ມທຶນເພື່ອລ້າງການຂາດທຶນສະສົມດັ່ງກ່າວ.

ໃນກໍລະນີ ສະຫະກອນສິນເຊື່ອ ແລະ ເງິນຝາກປະຢັດ ຍັງມີການຂາດທຶນສະສົມ ແຕ່ມີກຳໄລໃນປີ ແມ່ນບໍ່ໃຫ້ແບ່ງເງິນປັນຜົນ.

**ມາດຕາ 54 ຄັງສຳຮອງ ແລະ ຄັງສະສົມ**

ຄັງສຳຮອງ ແມ່ນຄັງເງິນທີ່ສ້າງຂຶ້ນ ເພື່ອທົດແທນການຂາດທຶນ ຈາກການດຳເນີນທຸລະກິດສະຫະກອນສິນເຊື່ອ ແລະ ເງິນຝາກປະຢັດ ຊຶ່ງຫັກຈາກກຳໄລສຸດທິຂອງທຸກໆປີ ຢ່າງໜ້ອຍ ຫ້າ ສ່ວນຮ້ອຍ. ເມື່ອຄັງສຳຮອງນີ້ ມີເງິນສະສົມໄດ້ເຄິ່ງໜຶ່ງຂອງທຶນຈົດທະບຽນແລ້ວ ສາມາດໂຈະການຫັກເງິນເຂົ້າຄັງສຳຮອງດັ່ງກ່າວ.

ຄັງສະສົມ ແມ່ນຄັງເງິນທີ່ສ້າງຂຶ້ນ ເພື່ອສະສົມທຶນໄວ້ ນຳໃຊ້ເຂົ້າໃນການຂະຫຍາຍກິດຈະການ, ການກໍ່ສ້າງໂຄງລ່າງພື້ນຖານ, ການປະກອບວັດຖຸເຕັກນິກ ແລະ ລົງທຶນ ຊຶ່ງຫັກຈາກກຳໄລສຸດທິຂອງທຸກໆປີ ຢ່າງ ໜ້ອຍ ສິບ ສ່ວນຮ້ອຍ.

**ມາດຕາ 55 ການບັນຊີ**

ສະຫະກອນສິນເຊື່ອ ແລະ ເງິນຝາກປະຢັດ ຕ້ອງຖືບັນຊີ ຕາມກົດໝາຍວ່າດ້ວຍການບັນຊີ ແລະ ລະບຽບການທີ່ກ່ຽວຂ້ອງ.

ສະຫະກອນສິນເຊື່ອ ແລະ ເງິນຝາກປະຢັດ ຕ້ອງບັນທຶກບັນຊີຕາມຜັງບັນຊີ ທີ່ທະນາຄານແຫ່ງ ສປປ ລາວ ວາງອອກ.

ການສ້າງ, ການນຳໃຊ້ໂປຣແກຣມບັນຊີ ແລະ/ຫຼື ການເພີ່ມເລກໝາຍບັນຊີໃດໜຶ່ງໃນຜັງບັນຊີ ຕ້ອງໄດ້ຂໍອະນຸຍາດຈາກທະນາຄານແຫ່ງ ສປປ ລາວ.

ປີການບັນຊີຂອງສະຫະກອນສິນເຊື່ອ ແລະ ເງິນຝາກປະຢັດ ເລີ່ມແຕ່ວັນທີ 1 ມັງກອນ ແລະ ສິ້ນສຸດວັນທີ 31 ທັນວາ ຂອງແຕ່ລະປີ.

### ມາດຕາ 56 ການສະຫຼຸບບັນຊີ

ສະຫະກອນສິນເຊື່ອ ແລະ ເງິນຝາກປະຢັດ ຕ້ອງສະຫຼຸບບັນຊີ ເພື່ອສະແດງຜົນການດຳເນີນທຸລະກິດ, ຖານະການເງິນຕາມຄວາມເປັນຈິງ ແລະ ຮັບໃຊ້ການສ້າງເອກະສານລາຍງານການເງິນ ຕາມລະບຽບການ ຂອງທະນາຄານແຫ່ງ ສປປ ລາວ.

### ມາດຕາ 57 ເອກະສານລາຍງານການເງິນ

ສະຫະກອນສິນເຊື່ອ ແລະ ເງິນຝາກປະຢັດ ຕ້ອງສ້າງເອກະສານລາຍງານການເງິນປະຈຳເດືອນ, ໄຕມາດ ແລະ ປີ. ເອກະສານລາຍງານການເງິນ ປະກອບດ້ວຍ ໃບລາຍງານຖານະການເງິນ, ໃບລາຍງານຜົນການດຳເນີນງານ, ໃບລາຍງານກະແສເງິນສົດ, ໃບລາຍງານສ່ວນປ່ຽນແປງທຶນ ແລະ ບົດອະທິບາຍຊ້ອນທ້າຍເອກະສານລາຍງານການເງິນ.

ເອກະສານລາຍງານການເງິນປະຈຳປີ ຕ້ອງໄດ້ຮັບການຢັ້ງຢືນຈາກຄະນະກຳມະການກວດກາພາຍໃນ. ເມື່ອສຳເລັດການຢັ້ງຢືນແລ້ວ ໃຫ້ນຳສົ່ງເອກະສານດັ່ງກ່າວ ພາຍໃນເດືອນ ມີນາ ຂອງປີການບັນຊີຖັດໄປ ໃຫ້ແກ່ກົມຄຸ້ມຄອງສະຖາບັນການເງິນ ຫຼື ສາຂາທະນາຄານແຫ່ງ ສປປ ລາວ ຢູ່ທ້ອງຖິ່ນ ເພື່ອມີຄຳເຫັນ.

ສະຫະກອນສິນເຊື່ອ ແລະ ເງິນຝາກປະຢັດ ຕ້ອງພິມເຜີຍແຜ່ເອກະສານລາຍງານການເງິນ ປະຈຳປີ ບໍ່ໃຫ້ກາຍເດືອນ ເມສາ ຂອງປີການບັນຊີຖັດໄປ ໂດຍຜ່ານເວບໄຊຂອງຕົນ ຫຼື ຊ່ອງທາງອື່ນທີ່ເໝາະສົມ.

### ມາດຕາ 58 ການເປີດເຜີຍຂໍ້ມູນດ້ານການບັນຊີ

ສະຫະກອນສິນເຊື່ອ ແລະ ເງິນຝາກປະຢັດ ຕ້ອງເປີດເຜີຍຂໍ້ມູນດ້ານການບັນຊີຂອງຕົນ ໃຫ້ແກ່ມວນຊົນ ຜ່ານເວັບໄຊຂອງຕົນ ຫຼື ຊ່ອງທາງອື່ນ ທີ່ສະມາຊິກສາມາດເຂົ້າເຖິງໄດ້ ດັ່ງນີ້:

1. ບົດລາຍງານປະຈຳໄຕມາດ ຕາມລະບຽບການຂອງທະນາຄານແຫ່ງ ສປປ ລາວ;
2. ບົດລາຍງານປະຈຳປີ ແລະ ຄຳເຫັນຂອງບໍລິສັດກວດສອບພາຍນອກ ຕໍ່ບົດລາຍງານດັ່ງກ່າວ ຕາມລະບຽບການຂອງທະນາຄານແຫ່ງ ສປປ ລາວ;
3. ຂໍ້ມູນອື່ນ ທີ່ຊ່ວຍໃຫ້ສະມາຊິກສາມາດເຫັນໄດ້ສະພາບຄວາມໝັ້ນຄົງ ຂອງສະຫະກອນສິນເຊື່ອ ແລະ ເງິນຝາກປະຢັດ.

### ມາດຕາ 59 ການລາຍງານ

ສະຫະກອນສິນເຊື່ອ ແລະ ເງິນຝາກປະຢັດ ຕ້ອງສົ່ງບົດລາຍງານສະພາບການດຳເນີນທຸລະກິດຂອງຕົນ ໃຫ້ທະນາຄານແຫ່ງ ສປປ ລາວ ດັ່ງນີ້:

1. ການບໍລິຫານ, ການດຳເນີນງານ, ຜົນການກວດກາພາຍໃນ ແລະ ເອກະສານລາຍງານການເງິນ;
2. ເນື້ອໃນອື່ນ ຕາມການທວງຖາມຂອງກົມຄຸ້ມຄອງສະຖາບັນການເງິນ ຫຼື ສາຂາທະນາຄານແຫ່ງ ສປປ ລາວ ຢູ່ທ້ອງຖິ່ນ.

**ມາດຕາ 60 ການກວດສອບໂດຍບໍລິສັດກວດສອບພາຍນອກ**

ໃນແຕ່ລະປີ ສະຫະກອນສິນເຊື່ອ ແລະ ເງິນຝາກປະຢັດ ຕ້ອງໄດ້ຮັບການກວດສອບ ໂດຍບໍລິສັດກວດສອບພາຍນອກ ຕາມລະບຽບການທີ່ທະນາຄານແຫ່ງ ສປປ ລາວ ກຳນົດ ເພື່ອ:

1. ຢັ້ງຢືນຄວາມຖືກຕ້ອງ ແລະ ຄົບຖ້ວນຂອງບັນຊີ ຕາມລະບົບບັນຊີທີ່ທະນາຄານແຫ່ງ ສປປ ລາວ ກຳນົດ;

2. ຢັ້ງຢືນຄວາມຖືກຕ້ອງ ແລະ ຄົບຖ້ວນ ຂອງການລາຍງານການເງິນປະຈຳປີ;

3. ຢັ້ງຢືນຄວາມຖືກຕ້ອງ ແລະ ຄົບຖ້ວນຂອງການຄວບຄຸມພາຍໃນ ພ້ອມທັງໃຫ້ຄຳແນະນຳກ່ຽວກັບມາດຕະການແກ້ໄຂ;

4. ຢັ້ງຢືນການແກ້ໄຂຂອງສະຫະກອນສິນເຊື່ອ ແລະ ເງິນຝາກປະຢັດ ຕໍ່ການລະເມີດທີ່ທະນາຄານແຫ່ງ ສປປ ລາວ ໄດ້ກວດເຫັນ ແລະ ໄດ້ແຈ້ງໃຫ້ບໍລິສັດກວດສອບພາຍນອກ;

5. ລາຍງານໃຫ້ທະນາຄານແຫ່ງ ສປປ ລາວ ກ່ຽວກັບການລະເມີດກົດໝາຍ ແລະ ລະບຽບການຂອງທະນາຄານແຫ່ງ ສປປ ລາວ ຫຼື ການກະທຳໃດໜຶ່ງ ທີ່ອາດຈະມີຜົນຕໍ່ຄວາມໝັ້ນຄົງຂອງສະຫະກອນສິນເຊື່ອ ແລະ ເງິນຝາກປະຢັດ.

**ມາດຕາ 61 ການວ່າຈ້າງບໍລິສັດກວດສອບພາຍນອກ**

ສະຫະກອນສິນເຊື່ອ ແລະ ເງິນຝາກປະຢັດ ສາມາດວ່າຈ້າງບໍລິສັດກວດສອບພາຍນອກ ທີ່ທະນາຄານແຫ່ງ ສປປ ລາວ ໄດ້ຮັບຮອງ ເພື່ອກວດສອບການດຳເນີນທຸລະກິດຂອງຕົນ.

ບໍລິສັດກວດສອບພາຍນອກ ທີ່ຖືກວ່າຈ້າງໃຫ້ດຳເນີນການກວດສອບສະຫະກອນສິນເຊື່ອ ແລະ ເງິນຝາກປະຢັດໃດໜຶ່ງ ມີພັນທະໃຫ້ຄວາມຮ່ວມມື ແລະ ສະໜອງຂໍ້ມູນຕ່າງໆ ໃຫ້ທະນາຄານແຫ່ງ ສປປ ລາວ ຕາມກົດໝາຍ ແລະ ລະບຽບການ ຫຼື ຕາມການຮຽກຮ້ອງ ຂອງທະນາຄານແຫ່ງ ສປປ ລາວ. ໃນກໍລະນີ ຫາກເຫັນວ່າບໍລິສັດກວດສອບພາຍນອກ ລະເມີດກົດໝາຍ ຫຼື ລະບຽບການທີ່ກ່ຽວຂ້ອງ, ທະນາຄານແຫ່ງ ສປປ ລາວ ມີສິດສັ່ງໃຫ້ສະຫະກອນສິນເຊື່ອ ແລະ ເງິນຝາກປະຢັດ ໂຈະ ຫຼື ຍົກເລີກ ການວ່າຈ້າງບໍລິສັດກວດສອບພາຍນອກດັ່ງກ່າວ.

## ໝວດທີ 8
## ມາດຕະການແກ້ໄຂແຕ່ຫົວທີ

**ມາດຕາ 62 ສະພາບສະກອນສິນເຊື່ອ ແລະ ເງິນຝາກປະຢັດ ທີ່ຖືກນຳໃຊ້ມາດຕະການແກ້ໄຂແຕ່ຫົວທີ**

ສະຫະກອນສິນເຊື່ອ ແລະ ເງິນຝາກປະຢັດ ຈະຖືກນຳໃຊ້ມາດຕະການແຕ່ຫົວທີ ຖ້າຫາກຕົກຢູ່ໃນສະພາບໃດໜຶ່ງ ດັ່ງນີ້:

1. ການເຄື່ອນໄຫວມີລັກສະນະບໍ່ໝັ້ນຄົງດ້ານການເງິນ ຫຼື ມີຜົນກະທົບຕໍ່ຜົນປະໂຫຍດ ຂອງສະມາຊິກ;

2. ລະເມີດ ຫຼື ອາດຈະມີການລະເມີດລະບຽບກົດໝາຍ ແລະ ລະບຽບດ້ານຄວາມໝັ້ນຄົງດ້ານການເງິນ;

3. ການຄຸ້ມຄອງບໍລິຫານ, ການຄວບຄຸມພາຍໃນ ແລະ ການບັນຊີ ມີຄວາມບົກຜ່ອງ ຊຶ່ງອາດເຮັດໃຫ້ມີຄວາມສ່ຽງສູງຕໍ່ການເຄື່ອນໄຫວດຳເນີນງານ;

4. ທ່າອ່ຽງການຂາດທຶນ ສາມ ປີຕໍ່ເນື່ອງ ຊຶ່ງອາດຈະສົ່ງຜົນກະທົບດ້ານລົບໃນໄລຍະກາງ ແລະ ໄລຍະຍາວ;

5. ມີສະພາບອື່ນ ຕາມການກຳນົດ ແລະ ການປະເມີນ ຂອງທະນາຄານແຫ່ງ ສປປ ລາວ.

### ມາດຕາ 63 ມາດຕະການແກ່ທົວທີ

ທະນາຄານແຫ່ງ ສປປ ລາວ ສາມາດນຳໃຊ້ມາດຕະການແກ່ທົວທີໃດໜຶ່ງ ຕໍ່ສະຫະກອນສິນເຊື່ອ ແລະ ເງິນຝາກປະຢັດ ຊຶ່ງຕົກຢູ່ໃນສະພາບທີ່ໄດ້ກຳນົດໄວ້ໃນ ມາດຕາ 62 ຂອງຂໍ້ຕົກລົງສະບັບນີ້ ດ້ວຍການປຶກສາຫາລືຮ່ວມກັບຜູ້ບໍລິຫານ ເພື່ອກຳນົດວິທີແກ້ໄຂ ແລະ ໃຫ້ສະຫະກອນສິນເຊື່ອ ແລະ ເງິນຝາກປະຢັດປະຕິບັດ ດັ່ງນີ້:

1. ສ້າງແຜນການແກ້ໄຂ ແລະ ປະຕິບັດຕາມແຜນການດັ່ງກ່າວ;
2. ສ້າງແຜນປັບປຸງໂຄງສ້າງໜີ້ ກັບເຈົ້າໜີ້ ໂດຍສອດຄ່ອງກັບແຜນການແກ້ໄຂຂອງຕົນ;
3. ແກ້ໄຂສະພາບຄ່ອງ ແລະ ບໍລິຫານຊັບສິນ ໃຫ້ແທດເໝາະກັບສະພາບແຫຼ່ງທຶນ;
4. ຈຳກັດການລົງທຶນ, ຫຼຸດການຊື້-ຂາຍຊັບສິນ ແລະ/ຫຼື ຫຼຸດການຮັບເງິນຝາກ;
5. ເພີ່ມທຶນຈົດທະບຽນ ພາຍໃນໄລຍະເວລາທີ່ກຳນົດໃຫ້;
6. ຫັກເງິນແຮເພື່ອປະກັນຄວາມສ່ຽງສູງຂຶ້ນ ແລະ ຫຼຸດລາຍຈ່າຍໃນການດຳເນີນງານ;
7. ຫຼຸດຜ່ອນຄວາມສ່ຽງທີ່ເກີດຈາກທຸລະກຳ, ຜະລິດຕະພັນ ແລະ ການຄຸ້ມຄອງບໍລິຫານຂອງຕົນ;
8. ລາຍງານຢ່າງຕໍ່ເນື່ອງ ກ່ຽວກັບຖານະການເງິນ ລວມທັງຄວາມພຽງພໍຂອງທຶນ ແລະ ສະພາບຄ່ອງ;
9. ນຳໃຊ້ກຳໄລສຸດທິຂອງຕົນ ເພື່ອເພີ່ມທຶນ ໂດຍຈຳກັດ ຫຼື ໂຈະ ການຈ່າຍເງິນປັນຜົນ ແລະ ລາຍຈ່າຍອື່ນ;
10. ປັບປຸງໂຄງສ້າງການຖືຮຸ້ນ ແລະ/ຫຼື ໂຄງປະກອບການຈັດຕັ້ງ, ຍຸດທະສາດການດຳເນີນທຸລະກິດ ແລະ ລະບົບການບໍລິຫານຄວາມສ່ຽງ;
11. ປັບປຸງໂຄງສ້າງເງິນກູ້, ຈຳກັດການສະໜອງສິນເຊື່ອໃໝ່ ແລະ ການລົງທຶນ;
12. ຈຳກັດສິດ ຫຼື ສັ່ງປົດ ຜູ້ທີ່ມີການລະເມີດ;
13. ນຳໃຊ້ມາດຕະການອື່ນ ທີ່ທະນາຄານແຫ່ງ ສປປ ລາວ ເຫັນວ່າຈຳເປັນ.

### ມາດຕາ 64 ພັນທະຂອງສະຫະກອນສິນເຊື່ອ ແລະ ເງິນຝາກປະຢັດ ທີ່ຖືກນຳໃຊ້ມາດຕະການແກ່ທົວທີ

ຜູ້ບໍລິຫານ ແລະ ພະນັກງານ ຂອງສະຫະກອນສິນເຊື່ອ ແລະ ເງິນຝາກປະຢັດ ທີ່ຖືກນຳໃຊ້ມາດຕະການແກ່ທົວທີ ຕ້ອງໃຫ້ຄວາມຮ່ວມມື, ອຳນວຍຄວາມສະດວກ ແລະ ສະໜອງຂໍ້ມູນຢ່າງຖືກຕ້ອງ, ຄົບຖ້ວນ ແລະ ທັນກຳນົດເວລາ ຕາມຄວາມຮຽກຮ້ອງຕ້ອງການ ຂອງທະນາຄານແຫ່ງ ສປປ ລາວ.

**ມາດຕາ 65 ການລາຍງານການຈັດຕັ້ງປະຕິບັດມາດຕະການແກ່ທີ່ອໍທີ**

ສະຫະກອນສິນເຊື່ອ ແລະ ເງິນຝາກປະຢັດ ຕ້ອງລາຍງານຜົນຂອງການຈັດຕັ້ງປະຕິບັດມາດຕະການແກ່ທີ່ອໍທີ ໃຫ້ແກ່ທະນາຄານແຫ່ງ ສປປ ລາວ ຊາບຢ່າງເປັນລາຍລັກອັກສອນ ໃນແຕ່ລະໄລຍະ.

ໃນກໍລະນີ ທີ່ທະນາຄານແຫ່ງ ສປປ ລາວ ຫາກກໍານົດໃຫ້ມີການກວດສອບຈາກບໍລິສັດກວດສອບພາຍນອກ ໃນລະຫວ່າງການຈັດຕັ້ງປະຕິບັດມາດຕະການແກ່ທີ່ອໍທີ, ເມື່ອສໍາເລັດການກວດສອບແລ້ວ, ບໍລິສັດກວດສອບທີ່ກວດສອບນັ້ນ ຕ້ອງສົ່ງບົດລາຍງານການກວດສອບຂອງຕົນ ໃຫ້ທະນາຄານແຫ່ງ ສປປ ລາວ ພາຍໃນເວລາ ທີ່ທະນາຄານແຫ່ງ ສປປ ລາວ ກໍານົດ.

## ໝວດທີ 9
## ການຄວບກິດຈະການ

**ມາດຕາ 66 ການຄວບກິດຈະການ**

ສະຫະກອນສິນເຊື່ອ ແລະ ເງິນຝາກປະຢັດ ທີ່ຕັ້ງຢູ່ໃນຂົງເຂດດຽວກັນ ຫຼື ຢູ່ໃນແຂວງດຽວກັນ ສາມາດຄວບເຂົ້າກັນ ເພື່ອກາຍເປັນສະຫະກອນໃດໜຶ່ງ ຫຼື ສ້າງເປັນສະຫະກອນໃໝ່ ຕາມມະຕິກອງປະຊຸມໃຫຍ່ສະມາຊິກ ຂອງແຕ່ລະສະ ຫະກອນ.

ສະຫະກອນສິນເຊື່ອ ແລະ ເງິນຝາກປະຢັດ ຕ້ອງແຈ້ງໄປຍັງເຈົ້າໜີ້ຂອງຕົນຢ່າງເປັນລາຍລັກອັກສອນ ເພື່ອໃຫ້ຮັບຮູ້ກ່ຽວກັບຈຸດປະສົງຂອງການຄວບກິດຈະການ, ຖ້າເຈົ້າໜີ້ບໍ່ເຫັນດີ ຕໍ່ການຄວບກິດຈະການ ຕ້ອງສະແດງຄໍາຄັດຄ້ານພາຍໃນ ຫົກສິບ ວັນ ນັບແຕ່ວັນທີ່ໄດ້ຮັບຄໍາແຈ້ງ ເປັນຕົ້ນໄປ.

ຖ້າເຈົ້າໜີ້ບໍ່ມີຄໍາຕອບພາຍໃນກໍານົດເວລາດັ່ງກ່າວ ໃຫ້ຖືວ່າບໍ່ມີຄໍາຄັດຄ້ານ.

ຖ້າເຈົ້າໜີ້ຄັດຄ້ານ ສະຫະກອນສິນເຊື່ອ ແລະ ເງິນຝາກປະຢັດ ຈະຄວບເຂົ້າກັນບໍ່ໄດ້ ຈົນກວ່າຈະໄດ້ຊໍາລະໜີ້ ຫຼື ໄດ້ຕົກລົງຈະຊໍາລະໜີ້ ໃຫ້ແກ່ເຈົ້າໜີ້ເປັນລາຍລັກອັກສອນ.

ສະພາບໍລິຫານຂອງແຕ່ລະສະຫະກອນສິນເຊື່ອ ແລະ ເງິນຝາກປະຢັດ ທີ່ສະເໜີຄວບເຂົ້າກັນ ຕ້ອງແຕ່ງຕັ້ງຜູ້ຕາງໜ້າສະຫະກອນສິນເຊື່ອ ຫຼື ເງິນຝາກປະຢັດ ບໍ່ເກີນ ສາມ ຄົນ ເພື່ອດໍາເນີນການຂໍອະນຸຍາດຄວບກິດຈະການ.

**ມາດຕາ 67 ຂັ້ນຕອນການຄວບກິດຈະການ**

ການຄວບກິດຈະການເພື່ອກາຍເປັນສະຫະກອນສິນເຊື່ອ ແລະ ເງິນຝາກປະຢັດໃດໜຶ່ງ ຕ້ອງຍື່ນຄໍາຮ້ອງຂໍຄວບກິດຈະການ ເຖິງ ກົມຄຸ້ມຄອງສະຖາບັນການເງິນ ຫຼື ສາຂາທະນາຄານແຫ່ງ ສປປ ລາວ ຢູ່ທ້ອງຖິ່ນພິຈາລະນາ. ເອກະສານປະກອບຂໍຄວບກິດຈະການ ມີດັ່ງນີ້:

1. ສໍາເນົາມະຕິກອງປະຊຸມໃຫຍ່ສະມາຊິກ ທີ່ເຫັນດີໃຫ້ຄວບກິດຈະການ;
2. ເອກະສານຢັ້ງຢືນຂອງແຕ່ລະສະຫະກອນສິນເຊື່ອ ແລະ ເງິນຝາກປະຢັດ ທີ່ຈະຄວບເຂົ້າກັນວ່າໄດ້ແຈ້ງໄປຍັງເຈົ້າໜີ້ຂອງຕົນ ແລະ ບໍ່ມີເຈົ້າໜີ້ຄັດຄ້ານພາຍໃນກໍານົດເວລາ ຫຼື ໃນກໍລະນີມີເຈົ້າໜີ້ຄັດຄ້ານ ແຕ່ສະຫະກອນສິນເຊື່ອ ແລະ ເງິນຝາກປະຢັດ ໄດ້ຊໍາລະໜີ້ ຫຼື ໄດ້ຕົກລົງຈະຊໍາລະໜີ້ໃຫ້ແກ່ເຈົ້າໜີ້ເປັນລາຍລັກອັກສອນ;
3. ກົດລະບຽບພາຍໃນຂອງສະຫະກອນສິນເຊື່ອ ແລະ ເງິນຝາກປະຢັດ ທີ່ຄວບເຂົ້າກັນ;
4. ແຜນດໍາເນີນທຸລະກິດ ສາມ ປີ;

5. ເອກະສານລາຍງານການເງິນ ໄລຍະ ສາມ ປີຍ້ອນຫຼັງ ຈົນຮອດ ປັດຈຸບັນ ຂອງສະຫະກອນສິນເຊື່ອ ແລະ ເງິນຝາກປະຢັດ ທີ່ຈະຄວບເຂົ້າກັນ.

ພາຍຫຼັງໄດ້ຮັບເອກະສານຂໍຄວບກິດຈະການ ຢ່າງຄົບຖ້ວນ ແລະ ຖືກຕ້ອງ ແລ້ວ ກົມຄຸ້ມຄອງສະຖາບັນການເງິນ ຫຼື ສາຂາທະນາຄານແຫ່ງ ສປປ ລາວ ຢູ່ທ້ອງຖິ່ນ ຕ້ອງພິຈາລະນາ ແລະ ແຈ້ງຕອບ ຫຼື ປະຕິເສດຢ່າງເປັນລາຍລັກອັກສອນ ພາຍໃນກຳນົດເວລາ ສາມສິບ ວັນ.

ສຳລັບການຄວບກິດຈະການ ເພື່ອສ້າງເປັນສະຫະກອນສິນເຊື່ອ ແລະ ເງິນຝາກປະຢັດໃໝ່ ຕ້ອງປະກອບເອກະສານ ຕາມທີ່ໄດ້ກຳນົດໄວ້ໃນວັກໜຶ່ງເທິງນີ້ ແລະ ດຳເນີນການຂໍອະນຸຍາດດຳເນີນທຸລະກິດ ຕາມທີ່ໄດ້ກຳນົດໄວ້ໃນໝວດທີ 2 ຂອງຂໍ້ຕົກລົງສະບັບນີ້.

**ມາດຕາ 68 ຜົນຂອງການຄວບກິດຈະການ**

ສະຫະກອນສິນເຊື່ອ ແລະ ເງິນຝາກປະຢັດ ທີ່ຄວບເຂົ້າກັນ ເພື່ອກາຍເປັນສະຫະກອນໃດໜຶ່ງ ຕ້ອງໄດ້ແຈ້ງຂະແໜງອຸດສາຫະກຳ ແລະ ການຄ້າ ແລະ ຂະແໜງການເງິນ. ສຳລັບ ສະຫະກອນທີ່ສ້າງຕັ້ງໃໝ່ໂດຍການຄວບເຂົ້າກັນ ຕ້ອງໄດ້ຂຶ້ນທະບຽນວິສາຫະກິດໃໝ່.

ສະຫະກອນສິນເຊື່ອ ແລະ ເງິນຝາກປະຢັດໃໝ່ ຈະໄດ້ຮັບຊັບສິນ, ໜີ້ສິນ, ສິດ ແລະ ຄວາມຮັບຜິດຊອບຂອງສະຫະກອນສິນເຊື່ອ ແລະ ເງິນຝາກປະຢັດເກົ່າ ທີ່ໄດ້ຄວບເຂົ້າກັນທັງໝົດ.

## ໝວດທີ 10
## ການຍຸບເລີກ, ການລົ້ມລະລາຍ ແລະ ການຊຳລະສະສາງ

**ມາດຕາ 69 ການຍຸບເລີກ**

ກົມຄຸ້ມຄອງສະຖາບັນການເງິນ ຫຼື ສາຂາທະນາຄານແຫ່ງ ສປປ ລາວ ຢູ່ທ້ອງຖິ່ນ ຈະພິຈາລະນາການຍຸບເລີກສະຫະກອນສິນເຊື່ອ ແລະ ເງິນຝາກປະຢັດ ຍ້ອນສາເຫດຕົ້ນຕໍໃດໜຶ່ງ ດັ່ງນີ້:

1. ມີການຮ້ອງຂໍຍຸບເລີກ ຕາມມະຕິຂອງກອງປະຊຸມໃຫຍ່ສະມາຊິກ;

2. ໄດ້ຮັບອະນຸຍາດດຳເນີນທຸລະກິດບົນພື້ນຖານການສະໜອງຂໍ້ມູນທີ່ບໍ່ຖືກຕ້ອງ ຊຶ່ງສົ່ງຜົນກະທົບຮ້າຍແຮງຕໍ່ຄວາມໝັ້ນຄົງຂອງສະຫະກອນສິນເຊື່ອ ແລະ ເງິນຝາກປະຢັດ;

3. ບໍ່ດຳເນີນທຸລະກິດຂອງຕົນ ພາຍໃນເວລາ ເກົ້າສິບ ວັນ ນັບແຕ່ວັນໄດ້ຮັບໃບອະນຸຍາດດຳເນີນທຸລະກິດເປັນຕົ້ນໄປ;

4. ມີການລະເມີດລະບຽບການກ່ຽວກັບການຮັກສາຄວາມໝັ້ນຄົງ ຢ່າງຮ້າຍແຮງ;

5. ມີການຄວບກິດຈະການ ຊຶ່ງພາໃຫ້ສະຫະກອນສິນເຊື່ອ ແລະ ເງິນຝາກປະຢັດ ເສຍຖານະນິຕິບຸກຄົນ.

**ມາດຕາ 70 ການລົ້ມລະລາຍ**

ການລົ້ມລະລາຍຂອງສະຫະກອນສິນເຊື່ອ ແລະ ເງິນຝາກປະຢັດ ໃຫ້ປະຕິບັດຕາມຂັ້ນຕອນທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍການຟື້ນຟູ ແລະ ການລົ້ມລະລາຍຂອງວິສາຫະກິດ.

**ມາດຕາ 71 ຜົນຂອງການຍຸບເລີກ ຫຼື ລົ້ມລະລາຍ**

ພາຍຫຼັງການຍຸບເລີກ ຫຼື ລົ້ມລະລາຍແລ້ວ ສະຫະກອນສິນເຊື່ອ ແລະ ເງິນຝາກປະຢັດ ຈະຖືກຖອນໃບອະນຸຍາດດຳເນີນທຸລະກິດ ແລະ ດຳເນີນການຊຳລະສະສາງ.

ສະຫະກອນສິນເຊື່ອ ແລະ ເງິນຝາກປະຢັດທີ່ຖືກຍຸບເລີກ ຕ້ອງຮັບຜິດຊອບໃຊ້ແທນໜີ້ສິນຂອງຕົນຢ່າງຄົບຖ້ວນ.

ກົມຄຸ້ມຄອງສະຖາບັນການເງິນ ຫຼື ສາຂາທະນາຄານແຫ່ງ ສປປ ລາວ ຢູ່ທ້ອງຖິ່ນ ຕ້ອງລຶບຊື່ສະຫະກອນສິນເຊື່ອ ແລະ ເງິນຝາກປະຢັດ ທີ່ຖືກຍຸບເລີກ ຫຼື ລົ້ມລະລາຍ ອອກຈາກບັນຊີລາຍຊື່ສະຫະກອນສິນເຊື່ອແລະ ເງິນຝາກປະຢັດ ທີ່ເປີດເຜີຍຕໍ່ມວນຊົນ.

**ມາດຕາ 72 ການແຕ່ງຕັ້ງຄະນະຊຳລະສະສາງ**

ພາຍຫຼັງການຍຸບເລີກສະຫະກອນສິນເຊື່ອ ແລະ ເງິນຝາກປະຢັດ ທະນາຄານແຫ່ງ ສປປ ລາວ ຈະແຕ່ງຕັ້ງຄະນະ ຫຼື ຜູ້ຊຳລະສະສາງ ຊຶ່ງປະກອບດ້ວຍບຸກຄົນທັງພາກລັດ ແລະ ເອກະຊົນ ທີ່ມີຄຸນວຸດທິ ແລະ ເງື່ອນໄຂທີ່ເໝາະສົມ ເພື່ອດຳເນີນການຊຳລະສະສາງ.

ໃນກໍລະນີການຊຳລະສະສາງຂອງສະຫະກອນສິນເຊື່ອ ແລະ ເງິນຝາກປະຢັດ ທີ່ຍຸບເລີກດ້ວຍຄວາມສະໝັກໃຈ ຖ້າຫາກເຫັນວ່າສະຫະກອນສິນເຊື່ອ ແລະ ເງິນຝາກປະຢັດດັ່ງກ່າວ ມີຄວາມສາມາດຊຳລະສະສາງໜີ້ສິນຂອງຕົນຕໍ່ຜູ້ຝາກເງິນ ແລະ ເຈົ້າໜີ້ອື່ນ ໄດ້ຢ່າງຄົບຖ້ວນ, ທະນາຄານແຫ່ງ ສປປ ລາວ ກໍຈະມອບໃຫ້ສະຫະກອນສິນເຊື່ອ ແລະ ເງິນຝາກປະຢັດ ທີ່ຂໍຍຸບເລີກນັ້ນ ຈັດຕັ້ງການຊຳລະສະສາງດ້ວຍຕົນເອງ, ພາຍຫຼັງສຳເລັດການຊຳລະສະສາງແລ້ວ ຕ້ອງລາຍງານ ໃຫ້ທະນາຄານແຫ່ງ ສປປ ລາວ ຢ່າງເປັນລາຍລັກອັກສອນ.

**ມາດຕາ 73 ສິດ ແລະ ໜ້າທີ່ ຂອງຄະນະຊຳລະສະສາງ**

ຄະນະຊຳລະສະສາງ ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ຮັບຜິດຊອບທັງໝົດ ຄືກັນກັບຜູ້ບໍລິຫານ ຂອງສະຫະກອນສິນເຊື່ອ ແລະ ເງິນຝາກປະຢັດ;
2. ຄວບຄຸມຫ້ອງການ, ປຶ້ມບັນຊີ, ປຶ້ມບັນທຶກ ແລະ ຊັບສິນຕ່າງໆ;
3. ລົບລ້າງສັນຍາຂອງສະຫະກອນສິນເຊື່ອ ແລະ ເງິນຝາກປະຢັດ ທີ່ເຮັດຂຶ້ນໂດຍບໍ່ຖືກຕ້ອງ;
4. ປົກປັກຮັກສາຊັບສິນຂອງສະຫະກອນສິນເຊື່ອ ແລະ ເງິນຝາກປະຢັດ ບໍ່ໃຫ້ຕົກເຮ່ຍເສຍຫາຍ;
5. ເກັບກູ້ຊັບສິນຂອງສະຫະກອນສິນເຊື່ອ ແລະ ເງິນຝາກປະຢັດ;
6. ສຳຫຼວດ ແລະ ຂຶ້ນບັນຊີເຈົ້າໜີ້, ລູກໜີ້, ບັນຊີຊັບສິນ ແລະ ສ້າງໃບສະຫຼຸບຊັບສົມບັດຂອງສະຫະກອນສິນເຊື່ອ ແລະ ເງິນຝາກປະຢັດ ຄືນໃໝ່ ແລ້ວສົ່ງສຳເນົາໃຫ້ທະນາຄານແຫ່ງ ສປປ ລາວ ຊາບ ພ້ອມທັງພິມເຜີຍແຜ່ຜ່ານສື່ມວນຊົນ;
7. ກຳນົດຈຳນວນເງິນ ທີ່ຈະຊຳລະສະສາງຕາມບູລິມະສິດ;
8. ກຳນົດແຜນການ, ວິທີການ ແລະ ຮູບການຊຳລະສະສາງຊັບສິນ, ໜີ້ສິນ ເພື່ອສະເໜີທະນາຄານແຫ່ງ ສປປ ລາວ ພິຈາລະນາ;
9. ລາຍງານໃຫ້ທະນາຄານແຫ່ງ ສປປ ລາວ ຊາບ ໃນທຸກໆເດືອນ ກ່ຽວກັບຄວາມຄືບໜ້າຂອງການຊຳລະສະສາງ;

10. ນໍາໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມລະບຽບການທີ່ກ່ຽວຂ້ອງ.

**ມາດຕາ 74 ບຸລິມະສິດໃນການຊໍາລະສະສາງ**

ການຊໍາລະສະສາງຂອງສະຫະກອນສິນເຊື່ອ ແລະ ເງິນຝາກປະຢັດ ໃຫ້ປະຕິບັດຕາມລໍາດັບບຸລິມະສິດ ດັ່ງນີ້:

1. ຄ່າໃຊ້ຈ່າຍໃນການຊໍາລະສະສາງ;
2. ຈ່າຍຄືນເງິນຝາກ;
3. ຈ່າຍເງິນເດືອນ ແລະ ຄ່າແຮງງານຂອງພະນັກງານ ຍົກເວັ້ນຜູ້ບໍລິຫານ;
4. ໃຊ້ແທນໜີ້ສິນທີ່ມີການຄໍ້າປະກັນຕາມສັນຍາ;
5. ພັນທະທາງດ້ານການເງິນທີ່ມີຕໍ່ລັດ;
6. ໃຊ້ແທນໜີ້ສິນທີ່ບໍ່ມີການຄໍ້າປະກັນ;
7. ສົ່ງຄືນເງິນຮຸ້ນ ຖ້າຊັບສິນຍັງເຫຼືອຈາກການຊໍາລະສະສາງ.

**ມາດຕາ 75 ຄ່າໃຊ້ຈ່າຍໃນການຊໍາລະສະສາງ**

ສະຫະກອນສິນເຊື່ອ ແລະ ເງິນຝາກປະຢັດ ທີ່ຖືກຍຸບເລີກ ຫຼື ລົ້ມລະລາຍ ເປັນຜູ້ຮັບຜິດຊອບຄ່າໃຊ້ຈ່າຍໃນການຊໍາລະສະສາງ ຕາມການພິຈາລະນາຂອງຄະນະຊໍາລະສະສາງ ບົນພື້ນຖານການຮັບຮອງ ຂອງທະນາຄານແຫ່ງ ສປປ ລາວ.

**ມາດຕາ 76 ບົດລາຍງານສຸດທ້າຍ**

ພາຍຫຼັງດໍາເນີນການຊໍາລະສະສາງແລ້ວ ຄະນະຊໍາລະສະສາງຕ້ອງເຮັດບົດລາຍງານສຸດທ້າຍໃຫ້ແກ່ທະນາຄານແຫ່ງ ສປປ ລາວ.

ຫຼັງຈາກ ທີ່ທະນາຄານແຫ່ງ ສປປ ລາວ ໄດ້ຮັບຮອງເອົາບົດລາຍງານດັ່ງກ່າວແລ້ວ ຄະນະຊໍາລະສະສາງ ຈະໝົດຄວາມຮັບຜິດຊອບ ແລະ ຖືວ່າການຊໍາລະສະສາງສິ້ນສຸດລົງ.

## ໝວດທີ 11
## ການຄຸ້ມຄອງ ແລະ ກວດກາ

**ມາດຕາ 77 ການຄຸ້ມຄອງ ແລະ ກວດກາ**

ທະນາຄານແຫ່ງ ສປປ ລາວ ເປັນຜູ້ຮັບຜິດຊອບໂດຍກົງ ແລະ ເປັນເຈົ້າການປະສານສົມທົບກັບບັນດາຂະແໜງການ ແລະ ອົງການປົກຄອງທ້ອງຖິ່ນໃນການຄຸ້ມຄອງ ແລະ ກວດກາວຽກງານສະຫະກອນສິນເຊື່ອ ແລະ ເງິນຝາກປະຢັດ.

ອົງການຄຸ້ມຄອງ ແລະ ກວດກາ ປະກອບດ້ວຍ:

1. ກົມຄຸ້ມຄອງສະຖາບັນການເງິນ;
2. ສາຂາທະນາຄານແຫ່ງ ສປປ ລາວ ຢູ່ທ້ອງຖິ່ນ.

**ມາດຕາ 78 ສິດ ແລະ ໜ້າທີ່ ຂອງກົມຄຸ້ມຄອງສະຖາບັນການເງິນ**

ກົມຄຸ້ມຄອງສະຖາບັນການເງິນ ມີ ສິດ ແລະ ໜ້າທີ່ ໃນການຄຸ້ມຄອງສະຫະກອນສິນເຊື່ອ ແລະ ເງິນຝາກປະຢັດ ດັ່ງນີ້:

1. ຄົ້ນຄວ້າສ້າງ ແລະ ປັບປຸງ ນະໂຍບາຍ, ແຜນຍຸດທະສາດ ແລະ ນິຕິກຳ ທີ່ຕິດພັນກັບວຽກງານສະຫະກອນສິນເຊື່ອ ແລະ ເງິນຝາກປະຢັດ ເພື່ອສະເໜີຜູ້ວ່າການທະນາຄານແຫ່ງ ສປປ ລາວ ພິຈາລະນາ;

2. ຄຸ້ມຄອງ, ຕິດຕາມ ແລະ ກວດກາ ສະຫະກອນສິນເຊື່ອ ແລະ ເງິນຝາກປະຢັດ ໃນການດຳເນີນການຈັດຕັ້ງປະຕິບັດບັນດາຫຼັກການ, ລະບຽບການ ແລະ ມາດຕະການ ຕາມຂໍ້ຕົກລົງສະບັບນີ້ ແລະ ລະບຽບການທີ່ກ່ຽວຂ້ອງ;

3. ເຜີຍແຜ່ ແລະ ຊຸກຍູ້ການຈັດຕັ້ງປະຕິບັດ ນິຕິກຳ ກ່ຽວກັບວຽກງານສະຫະກອນສິນເຊື່ອ ແລະ ເງິນຝາກປະຢັດ ໃນຂອບເຂດທົ່ວປະເທດ;

4. ຄົ້ນຄວ້າ ອອກ ແລະ ຖອນ ໃບອະນຸຍາດດຳເນີນທຸລະກິດ ສະຫະກອນສິນເຊື່ອ ແລະ ເງິນຝາກປະຢັດ ລວມທັງ ການໂຈະຊົ່ວຄາວການດຳເນີນທຸລະກິດດັ່ງກ່າວ;

5. ວິເຄາະຖານະການເງິນຂອງສະຫະກອນສິນເຊື່ອ ແລະ ເງິນຝາກປະຢັດ ເພື່ອປະເມີນຄວາມໝັ້ນຄົງ ແລະ ແຈ້ງຜົນການວິເຄາະຖານະການເງິນປະຈຳເດືອນ ພ້ອມທັງລະບຸຄຳແນະນຳກ່ຽວກັບການບໍລິຫານຄວາມສ່ຽງ ແລະ ການດຳເນີນງານຄືນ ໃຫ້ແກ່ສະຫະກອນສິນເຊື່ອ ແລະ ເງິນຝາກປະຢັດ;

6. ກວດກາການດຳເນີນທຸລະກິດ ແລະ ນຳໃຊ້ມາດຕະການ ເພື່ອສະກັດກັ້ນການເຄື່ອນໄຫວ ທີ່ມີລັກສະນະລະເມີດລະບຽບກົດໝາຍ ຂອງສະຫະກອນສິນເຊື່ອ ແລະ ເງິນຝາກປະຢັດ;

7. ສະເໜີໃຫ້ ຜູ້ບໍລິຫານ ແລະ ພະນັກງານ ຂອງສະຫະກອນສິນເຊື່ອ ແລະ ເງິນຝາກປະຢັດ ສະໜອງຂໍ້ມູນທາງດ້ານການບັນຊີ ແລະ ຂໍ້ມູນອື່ນ ທີ່ຕິດພັນກັບສະຫະກອນສິນເຊື່ອ ແລະ ເງິນຝາກປະຢັດ;

8. ຝຶກອົບຮົມທາງດ້ານເຕັກນິກວິຊາການ ໃຫ້ແກ່ຜູ້ບໍລິຫານ ແລະ/ຫຼື ພະນັກງານ ຂອງສະຫະກອນສິນເຊື່ອ ແລະ ເງິນຝາກປະຢັດ;

9. ລາຍງານຜົນການຈັດຕັ້ງປະຕິບັດໜ້າທີ່ວຽກງານຂອງຕົນໃຫ້ແກ່ ຄະນະຜູ້ວ່າການທະນາຄານແຫ່ງ ສປປ ລາວ ຊາບແຕ່ລະໄລຍະ;

10. ປະສານສົມທົບກັບພາກສ່ວນອື່ນທີ່ກ່ຽວຂ້ອງ ໃນການຈັດຕັ້ງປະຕິບັດໜ້າທີ່ຂອງຕົນ;

11. ນຳໃຊ້ສິດ ແລະ ໜ້າທີ່ອື່ນ ຕາມລະບຽບການທີ່ກ່ຽວຂ້ອງ.

**ມາດຕາ 79 ສິດ ແລະ ໜ້າທີ່ ຂອງສາຂາທະນາຄານແຫ່ງ ສປປ ລາວ ຢູ່ທ້ອງຖິ່ນ**

ສາຂາທະນາຄານແຫ່ງ ສປປ ລາວ ຢູ່ທ້ອງຖິ່ນ ມີ ສິດ ແລະ ໜ້າທີ່ ຄຸ້ມຄອງສະຫະກອນສິນເຊື່ອ ແລະ ເງິນຝາກປະຢັດ ຕາມທີ່ໄດ້ກຳນົດໄວ້ໃນລະບຽບການສະເພາະ.

**ມາດຕາ 80 ຮູບການກວດກາ**

ການກວດກາວຽກງານສະຫະກອນສິນເຊື່ອ ແລະ ເງິນຝາກປະຢັດ ມີ ສາມຮູບການ ດັ່ງນີ້:

1. ການກວດກາປົກກະຕິ ຊຶ່ງແມ່ນການກວດກາທີ່ດຳເນີນໄປຕາມແຜນການຢ່າງເປັນປະຈຳ ແລະ ມີກຳນົດເວລາທີ່ແນ່ນອນ;

2. ການກວດກາໂດຍແຈ້ງໃຫ້ຊາບລ່ວງໜ້າ ຊຶ່ງແມ່ນການກວດການອກແຜນການ ເມື່ອເຫັນວ່າມີຄວາມຈຳເປັນ ຊຶ່ງຕ້ອງແຈ້ງໃຫ້ຜູ້ຖືກກວດກາຊາບລ່ວງໜ້າ;

3. ການກວດກາແບບກະທັນຫັນ ຊຶ່ງແມ່ນການກວດກາຮີບດ່ວນ ໂດຍບໍ່ໄດ້ແຈ້ງໃຫ້ຜູ້ຖືກກວດກາຊາບລ່ວງໜ້າ.

ໃນການດຳເນີນການກວດກາການເຄື່ອນໄຫວຂອງທະນາຄານແຫ່ງ ສປປ ລາວ ຕ້ອງປະຕິບັດໃຫ້ຖືກຕ້ອງຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ ຢ່າງເຂັ້ມງວດ.

### ມາດຕາ 81 ເນື້ອໃນການກວດກາ

ການກວດກາສະຫະກອນສິນເຊື່ອ ແລະ ເງິນຝາກປະຢັດ ມີເນື້ອໃນຕົ້ນຕໍ ດັ່ງນີ້:

1. ການຈັດຕັ້ງປະຕິບັດກົດໝາຍ ແລະ ລະບຽບການ ທີ່ກ່ຽວຂ້ອງ;

2. ການດຳເນີນທຸລະກິດ ເປັນຕົ້ນ ການຄຸ້ມຄອງບໍລິຫານພາຍໃນ, ການບໍລິຫານສິນເຊື່ອ, ການປະຕິບັດລະບຽບຄວາມໝັ້ນຄົງ, ການເງິນ ແລະ ການບັນຊີ.

## ໝວດທີ 12
## ຂໍ້ຫ້າມ ແລະ ມາດຕະການຕໍ່ຜູ້ລະເມີດ

### ມາດຕາ 82 ຂໍ້ຫ້າມທົ່ວໄປ

ຫ້າມ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ມີພຶດຕິກຳ ດັ່ງນີ້:

1. ດຳເນີນທຸລະກິດສະຫະກອນສິນເຊື່ອ ແລະ ເງິນຝາກປະຢັດ ໂດຍບໍ່ໄດ້ຮັບອະນຸຍາດ;

2. ນຳໃຊ້ຄຳວ່າ ສະຫະກອນສິນເຊື່ອ ແລະ ເງິນຝາກປະຢັດ ຫຼື ຄຳສັບທີ່ມີຄວາມໝາຍເປັນສະຫະກອນສິນເຊື່ອ ແລະ ເງິນຝາກປະຢັດ ຢູ່ໃນທຸລະກິດ, ຜະລິດຕະພັນ ຫຼື ການບໍລິການຂອງຕົນ ໂດຍບໍ່ໄດ້ຮັບອະນຸຍາດດຳເນີນທຸລະກິດສະຫະກອນສິນເຊື່ອ ແລະ ເງິນຝາກປະຢັດ;

3. ສວຍໃຊ້ການບໍລິການຂອງສະຫະກອນສິນເຊື່ອ ແລະ ເງິນຝາກປະຢັດ ເຂົ້າໃນການດຳເນີນທຸລະກິດທີ່ບໍ່ຖືກຕ້ອງຕາມກົດໝາຍ;

4. ປະຕິເສດ ຫຼື ບໍ່ໃຫ້ການຮ່ວມມືແກ່ການປະຕິບັດວຽກງານຂອງເຈົ້າໜ້າທີ່ກ່ຽວຂ້ອງ;

5. ມີພຶດຕິກຳອື່ນ ທີ່ເປັນການລະເມີດກົດໝາຍ ແລະ ລະບຽບການ.

### ມາດຕາ 83 ຂໍ້ຫ້າມສຳລັບສະຫະກອນສິນເຊື່ອ ແລະ ເງິນຝາກປະຢັດ

ຫ້າມສະຫະກອນສິນເຊື່ອ ແລະ ເງິນຝາກປະຢັດ ມີພຶດຕິກຳ ດັ່ງນີ້:

1. ຮັບເງິນຝາກ ແລະ ປ່ອຍເງິນກູ້ ໃຫ້ບຸກຄົນ, ກອງທຶນພັດທະນາບ້ານ ຫຼື ທະນາຄານບ້ານ ຫຼື ນິຕິບຸກຄົນ ທີ່ບໍ່ແມ່ນສະມາຊິກຂອງຕົນ;

2. ດຳເນີນທຸລະກຳເປັນເງິນຕາຕ່າງປະເທດ;

3. ກູ້ຢືມເງິນຈາກບຸກຄົນ ຫຼື ນິຕິບຸກຄົນ ທີ່ບໍ່ແມ່ນສະຖາບັນການເງິນ;

4. ກຳນົດເງື່ອນໄຂພິເສດໃຫ້ແກ່ຜູ້ກ່ຽວຂ້ອງ ເພື່ອໃຊ້ບໍລິການຂອງສະຫະກອນສິນເຊື່ອ ແລະ ເງິນຝາກປະຢັດ;

5. ຄິດໄລ່ເງິນເດືອນ ໃຫ້ແກ່ສະມາຊິກສະພາບໍລິຫານ, ຄະນະກຳມະການກວດກາພາຍໃນ ແລະ ຄະນະກຳມະການສິນເຊື່ອ;

6. ໃຫ້ກູ້ຢືມບ້ວງໃໝ່ ແກ່ລູກຄ້າທີ່ຖືກຈັດຊັ້ນເປັນໜີ້ທວງຍາກ ໂດຍທີ່ຍັງບໍ່ໄດ້ຮັບການຊຳລະຕົ້ນທຶນ ແລະ ດອກເບ້ຍໃນເງິນກູ້ບ້ວງເກົ່າ;

7. ສືບຕໍ່ຄິດໄລ່ດອກເບ້ຍເງິນກູ້ ທີ່ໄດ້ຖືກຈັດຊັ້ນເປັນໜີ້ທວງຍາກ ເຂົ້າເປັນລາຍຮັບ ແລະ ດອກເບ້ຍຄ້າງຮັບ;

8. ຕໍ່ອາຍຸເງິນກູ້ ເພື່ອຫຼີກລ້ຽງການຈັດຊັ້ນເປັນໜີ້ທວງຍາກ;

9. ນຳເອົາດອກເບ້ຍຄ້າງຊຳລະ ໄປຄິດໄລ່ເປັນຕົ້ນທຶນຂອງເງິນກູ້ບ້ວງໃໝ່;

10. ດຳເນີນທຸລະກຳເຊົ່າສິນເຊື່ອ;

11. ດຳເນີນທຸລະກິດແລກປ່ຽນເງິນຕາ;

12. ໃຫ້ບໍລິການຊຳລະສະສາງຜ່ານບັນຊີແຊັກ;

13. ຊື້ ຂາຍ ຄຳ, ວັດຖຸມີຄ່າ ຫຼື ດຳເນີນທຸລະກິດ ໃນອະສັງຫາລິມະຊັບ;

14. ອອກໜັງສືສິນເຊື່ອ, ໜັງສືຄ້ຳປະກັນ, ສະເໜີ ແລະ ດຳເນີນການຊື້-ຂາຍຮຸ້ນກູ້ ແລະ ການຄ້ຳປະກັນໃນຮູບແບບອື່ນ;

15. ດຳເນີນທຸລະກິດອື່ນ ໂດຍບໍ່ໄດ້ຮັບອະນຸຍາດຈາກທະນາຄານແຫ່ງ ສປປ ລາວ;

16. ມີພຶດຕິກຳອື່ນ ທີ່ເປັນການລະເມີດກົດໝາຍ ແລະ ລະບຽບການ.

**ມາດຕາ 84 ຂໍ້ຫ້າມສຳລັບສະພາບໍລິຫານ**

ຫ້າມສະພາບໍລິຫານ ສະຫະກອນສິນເຊື່ອ ແລະ ເງິນຝາກປະຢັດ ມີພຶດຕິກຳ ດັ່ງນີ້:

1. ເປັນປະທານສະພາບໍລິຫານ, ຜູ້ອຳນວຍການ ຫຼື ພະນັກງານ ຂອງສະຫະກອນສິນເຊື່ອ ແລະ ເງິນຝາກປະຢັດອື່ນ;

2. ວ່າຈ້າງ, ບັນຈຸ, ຊັບຊ້ອນ ຫຼື ແຕ່ງຕັ້ງ ພະນັກງານຜູ້ທີ່ມີສາຍພົວພັນກັບຜູ້ບໍລິຫານ ເຂົ້າໃນຕຳແໜ່ງບັນຊີ, ການເງິນ ຫຼື ຕຳແໜ່ງສຳຄັນອື່ນ ທີ່ເປັນການເອື້ອອຳນວຍຜົນປະໂຫຍດແກ່ຕົນ;

3. ສະແດງຄຳເຫັນ ຫຼື ເຄື່ອນໄຫວໃນລັກສະນະຂົນຂວາຍ, ໂນ້ມນ້າວ ເພື່ອຜົນປະໂຫຍດສ່ວນຕົນ ແລະ ຜູ້ທີ່ມີສາຍພົວພັນ;

4. ປະຈຳການ ແລະ ເຮັດໜ້າທີ່ຮັກສາການແທນຄະນະອຳນວຍການ;

5. ມີພຶດຕິກຳອື່ນ ທີ່ເປັນການລະເມີດກົດໝາຍ ແລະ ລະບຽບການ.

**ມາດຕາ 85 ຂໍ້ຫ້າມສຳລັບຄະນະຜູ້ອຳນວຍການ**

ຫ້າມຄະນະຜູ້ອຳນວຍການ ສະຫະກອນສິນເຊື່ອ ແລະ ເງິນຝາກປະຢັດ ມີພຶດຕິກຳ ດັ່ງນີ້:

1. ເປັນສະມາຊິກສະພາບໍລິຫານ, ຜູ້ອຳນວຍການ ຫຼື ພະນັກງານ ຂອງສະຫະກອນສິນເຊື່ອ ແລະ ເງິນຝາກປະຢັດອື່ນ;

2. ສະເໜີ ວ່າຈ້າງ, ບັນຈຸ, ສັບຊ້ອນ ພະນັກງານຜູ້ທີ່ມີສາຍພົວພັນກັບຜູ້ບໍລິຫານ ເຂົ້າໃນຕຳແໜ່ງ ບັນຊີ, ການເງິນ ຫຼື ຕຳແໜ່ງສຳຄັນອື່ນ ທີ່ເປັນການເອື້ອອຳນວຍຜົນປະໂຫຍດແກ່ຕົນ;

3. ສະແດງຄຳເຫັນ ຫຼື ເຄື່ອນໄຫວໃນລັກສະນະຂົນຂວາຍ, ໂນ້ມນ້າວ ເພື່ອຜົນປະໂຫຍດສ່ວນຕົວ ແລະ ຜູ້ທີ່ມີສາຍພົວພັນ;

4. ເປັນພະນັກງານສັງກັດອົງການຈັດຕັ້ງຂອງລັດ;

5. ມີພຶດຕິກຳອື່ນ ທີ່ເປັນການລະເມີດກົດໝາຍ ແລະ ລະບຽບການ.

**ມາດຕາ 86 ຂໍ້ຫ້າມສຳລັບເຈົ້າໜ້າທີ່ ແລະ ພະນັກງານ ທີ່ກ່ຽວຂ້ອງ**

ຫ້າມເຈົ້າໜ້າທີ່ ແລະ ພະນັກງານ ທີ່ກ່ຽວຂ້ອງຂອງລັດ ມີພຶດຕິກຳ ດັ່ງນີ້:

1. ເປີດເຜີຍຂໍ້ມູນທີ່ເປັນຄວາມລັບ ກ່ຽວກັບການຄຸ້ມຄອງສະຫະກອນສິນເຊື່ອ ແລະ ເງິນຝາກປະຢັດ ໂດຍບໍ່ໄດ້ຮັບອະນຸຍາດ;

2. ສວຍໃຊ້ໜ້າທີ່ຕຳແໜ່ງເພື່ອຫາຜົນປະໂຫຍດສ່ວນຕົວ ຫຼື ຜູ້ທີ່ກ່ຽວຂ້ອງ;

3. ທວງເອົາ, ຂໍເອົາ, ຮັບສິນບົນ, ລຳອຽງ, ກົດໜ່ວງຖ່ວງດຶງ, ສົມຮູ້ຮ່ວມຄິດ ແລະ ປອມແປງ ເອກະສານ;

4. ດຳເນີນທຸລະກິດ, ເປັນທີ່ປຶກສາ ຫຼື ເປັນພະນັກງານຂອງສະຫະກອນສິນເຊື່ອ ແລະ ເງິນຝາກປະຢັດ;

5. ເມີນເສີຍຕໍ່ຄວາມຮັບຜິດຊອບຂອງຕົນ ຫຼື ຕໍ່ພຶດຕິກຳທີ່ບໍ່ຖືກຕ້ອງຂອງຜູ້ດຳເນີນທຸລະກິດສະຫະກອນສິນເຊື່ອ ແລະ ເງິນຝາກປະຢັດ.

**ມາດຕາ 87 ມາດຕະການຕໍ່ຜູ້ລະເມີດ**

ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ຫາກລະເມີດຂໍ້ຕົກລົງສະບັບນີ້ ຫຼື ລະບຽບການທີ່ກ່ຽວຂ້ອງ ຈະຖືກປະຕິບັດມາດຕະການຕາມລະບຽບການທີ່ທະນາຄານແຫ່ງ ສປປ ລາວ ກຳນົດໄວ້ໃນແຕ່ລະໄລຍະ ຫຼື ຮັບຜິດຊອບໃຊ້ແທນຄ່າເສຍຫາຍທາງແພ່ງ ຫຼື ຖືກລົງໂທດທາງອາຍາ ຕາມກໍລະນີ ເບົາ ຫຼື ໜັກ.

## ໝວດທີ 13
## ບົດບັນຍັດສຸດທ້າຍ

**ມາດຕາ 88 ການຈັດຕັ້ງປະຕິບັດ**

ກົມຄຸ້ມຄອງສະຖາບັນການເງິນ, ສາຂາທະນາຄານແຫ່ງ ສປປ ລາວ ຢູ່ທ້ອງຖິ່ນ ເປັນເຈົ້າການໃນການຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ ໃຫ້ໄດ້ຮັບຜົນດີ.

ສະຫະກອນສິນເຊື່ອ ແລະ ເງິນຝາກປະຢັດ ແລະ ພາກສ່ວນທີ່ກ່ຽວຂ້ອງ ມີໜ້າທີ່ຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ຕາມພາລະບົດບາດຂອງຕົນຢ່າງເຂັ້ມງວດ.

**ມາດຕາ 89 ຜົນສັກສິດ**

ຂໍ້ຕົກລົງສະບັບນີ້ ມີຜົນສັກສິດ ນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ ແລະ ນໍາໃຊ້ປ່ຽນແທນຂໍ້ກໍານົດວ່າດ້ວຍການຄຸ້ມຄອງສະຫະກອນສິນເຊື່ອ ແລະ ເງິນຝາກປະຢັດ ສະບັບເລກທີ 03/ທຫລ, ລົງວັນທີ 20 ມິຖຸນາ 2008.

ຂໍ້ກໍານົດ, ບົດບັນຍັດ ທີ່ຂັດກັບຂໍ້ຕົກລົງສະບັບນີ້ ລ້ວນແຕ່ຖືກຍົກເລີກ.

ສະຫະກອນສິນເຊື່ອ ແລະ ເງິນຝາກປະຢັດ ທີ່ສ້າງຕັ້ງຂຶ້ນກ່ອນຂໍ້ຕົກລົງສະບັບນີ້ ຕ້ອງປັບປຸງໃຫ້ສອດຄ່ອງກັບຂໍ້ຕົກລົງສະບັບນີ້ ພາຍໃນກໍານົດເວລາ ສອງ ປີ ນັບແຕ່ວັນທີ່ຂໍ້ຕົກລົງ ມີຜົນສັກສິດເປັນຕົ້ນໄປ. ສໍາລັບການເພີ່ມທຶນຈົດທະບຽນຕໍ່າສຸດ ໃຫ້ປະຕິບັດຕາມແຈ້ງການຂອງທະນາຄານແຫ່ງ ສປປ ລາວ ແຕ່ລະໄລຍະ.

**ຜູ້ວ່າການທະນາຄານແຫ່ງ ສປປ ລາວ**

ທະນາຄານແຫ່ງ ສ.ປ.ປ ລາວ ຜູ້ວ່າການ

**ສອນໄຊ ສິດພະໄຊ**